# ຄູ່ມືການລ້ຽງໄກ່ລາດ









ຂຽນໂດຍ: ອຈ. ຄຳ ພິມມະຈັນ

ມີນາ 2022

# ຄູ່ມືການລ້ຽງໄກ່ລາດ

| | |
|---|---|
| ຊື່ໂມດູນ | ການລ້ຽງໄກ່ລາດ |
| ຊື່ອົງປະກອບ | - ຄຸນປະໂຫຍດຂອງການລ້ຽງໄກ່ລາດ<br>- ສະຖານທີ່ ແລະ ຄອກ<br>- ແນວພັນສັດ<br>- ອາຫານ<br>- ການລ້ຽງໄກ່ແຕ່ລະໄລຍະ<br>- ການຄັຣັກສາສຸຂະພາບສັດ |
| ອົງກອນອະນຸມັດ | ກະຊວງສຶກສາທິການ ແລະ ກິລາ |


ຂຽນໂດຍ: ອຈ. ຄຳ ພົມມະຈັນ

ເບີໂທຕິດຕໍ່: 020 28121144

ອີເມວ:khamp.laws@yahoo.com



ຄະນະກະເສດສາດ (ວິທະຍາເຂດນາບົງ)

ມະຫາວິທະຍາໄລແຫ່ງຊາດ


2022

# ສາລະບານ


| | |
|---|---|
| | ໜ້າ |
| ສາລະບານ.................................................................................................. | 3 |
| ບົດນຳ........................................................................................................ | 4 |
| ອົງປະກອບທີ 1: ຄຸນປະໂຫຍດຂອງການລ້ຽງໄກ່ລາດ.......................................................... | 5 |
| 1. ປະໂຫຍດຂອງການລ້ຽງໄກ່ລາດ........................................................................... | 6 |
| 2.ບັນຫາແລະຄວາມສ່ຽງໃນການລ້ຽງໄກ່ລາດ............................................................... | 7 |
| 3. ສະພາບການລ້ຽງໄກ່............................................................................................ | 9 |
| ອົງປະກອບທີ 2: ສະຖານທີ່ ແລະ ຄອກ............................................................................ | 9 |
| 1. ເລືອກສະຖານທີ່.................................................................................................... | 10 |
| 2. ຄອກ.................................................................................................................... | 13 |
| 3. ອຸປະກອນທີ່ຮັບໃຊ້ການລ້ຽງ................................................................................... | 16 |
| ອົງປະກອບທີ 3: ແນວພັນ............................................................................................ | 18 |
| 1. ການເລືອກພໍ່ພັນ.................................................................................................... | 18 |
| 2. ການເລືອກແມ່ພັນ.................................................................................................. | 18 |
| 3. ການເລືອກໄກ່ນ້ອຍ.................................................................................................. | 19 |
| 4. ຂໍ້ຫ້າມ ແລະ ການຄັດໄກ່........................................................................................ | 19 |
| ອົງປະກອບທີ 4: ອາຫານ.............................................................................................. | 21 |
| 1. ຄວາມຕ້ອງການອາຫານຂອງໄກ່............................................................................... | 21 |
| 2. ວັດຖຸດິບທີ່ນຳໃຊ້ໃນການລ້ຽງໄກ່............................................................................. | 22 |
| 3. ການສ້າງສູດອາຫານ................................................................................................ | 24 |
| ອົງປະກອບທີ 5: ການລ້ຽງໄກ່ແຕ່ລະໄລຍະ...................................................................... | 26 |
| 1. ການລ້ຽງໄກ່ນ້ອຍ.................................................................................................... | 28 |
| 2. ການລ້ຽງໄກ່ລຸ້ນສາວ................................................................................................ | 30 |
| 3. ການລ້ຽງໄກ່ພໍ່ແມ່ພັນ............................................................................................... | 31 |
| ອົງປະກອບທີ 6: ການຮັກສາສຸຂະພາບສັດ........................................................................ | 33 |
| 1. ການອະນາໄມ......................................................................................................... | 33 |
| 2. ການປ້ອງກັນ.......................................................................................................... | 34 |
| 3. ການສ້າງພູມຄຸ້ມກັນ................................................................................................ | 35 |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ກົມອາຊີວະສຶກສາ

ເລກທີ 528 /ອສ

ນະຄອນຫຼວງວຽງຈັນ, ວັນທີ 13 ມີນາ 2022

## ຂໍ້ຕົກລົງ

### ວ່າດ້ວຍການ ຮັບຮອງຄູ່ມື ຝຶກອົບຮົມໄລຍະສັ້ນ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ການສະເໜີຂອງຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ສະບັບເລກທີ 093/ຫກ ລົງວັນທີ່ 01 ກຸມພາ 2022.

### ຫົວໜ້າກົມອາຊີວະສຶກສາ ຕົກລົງ:

ມາດຕາ 01 ອະນຸມັດໃຫ້ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ນຳໃຊ້ຄູ່ມືຝຶກອົບຮົມໄລຍະສັ້ນ ແລະ ປຶ້ມຄູ່ມືຄູການຈັດຕັ້ງປະຕິບັດການຮຽນ-ການສອນ ໃນ 15 ສາຂາອາຊີບ ແລະ 03ໂມດູນໝວດຄວາມຮູ້ທົ່ວໄປ ຄື: 1)ອາຊີບລ້ຽງໝູ 2)ອາຊີບລ້ຽງກົບ 3)ອາຊີບລ້ຽງໄກ່ 4)ອາຊີບລ້ຽງງົວທອມ 5)ອາຊີບລ້ຽງປານິນ 6) ອາຊີບລ້ຽງປາດຸກ 7)ອາຊີບລ້ຽງເປັດ 8)ອາຊີບລ້ຽງແບ້ 9)ອາຊີບປູກຜັກກະລຳປີ 10)ອາຊີບປູກຜັກກາດຊອມ 11)ອາຊີບປູກເຫັດນາງຟ້າ 12)ອາຊີບປູກເຫັດເຟືອງ 13)ອາຊີບປູກເຫັດຂອນຂາວ 14)ອາຊີບການຕໍ່າຫູກຍອມສີທຳມະຊາດ(ລະດັບຕົ້ນ) 15)ອາຊີບການຕໍ່າຫູກຍອມສີທຳມະຊາດ(ລະດັບກາງ) 16)ການວາງແຜນທຸລະກິດຂະໜາດນ້ອຍ ແລະ ກາງ 17)ການສື່ສານສຳລັບຜູ້ປະກອບການ ແລະ 18)ທັກສະການສື່ສານສຳລັບຄູຝຶກ;

ມາດຕາ 02 ໃຫ້ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນຝຶກອົບຮົມຕາມຫຼັກສູດຝຶກອົບຮົມດັ່ງກ່າວ ໃນແຕ່ລະຂັ້ນຕອນ ແລະ ປະເມີນຜົນແຕ່ລະໄລຍະ ພ້ອມທັງອອກໃບຢັ້ງຢືນໃຫ້ຜູ້ທີ່ຜ່ານການຝຶກອົບຮົມຕາມລະບຽບຫຼັກການ;

ມາດຕາ 03 ໃຫ້ຫ້ອງການຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ່າງໆ ຈົ່ງພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ ຕາມສິດ ແລະ ໜ້າທີ່ຂອງໃຜລາວ;

ມາດຕາ 04 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມ

ກົມອາຊີວະສຶກສາ

ໜູພັນ ອຸດສາ

Nouphanh OUTSA

<u>ບ່ອນສົ່ງ:</u>

| | |
|---|---|
| - ພະແນກຂອງກົມອາຊີວະສຶກສາ | 01 ສະບັບ |
| - ຫ້ອງການຊາວໜຸ່ມປະຊາຊົນປະຕິວັດລາວ | 01 ສະບັບ |
| - ສະຖານອາຊີວະສຶກສາ ແຕ່ງລະ | 01 ສະບັບ |
| - ພາກສ່ວນກ່ຽວຂ້ອງ ບ່ອນລະ | 01 ສະບັບ |
| - ເກັບມ້ຽນ | 02 ສະບັບ |

# ບົດນຳ

ປື້ມຄູ່ມື ເຕັກນິກການລ້ຽງໄກ່ລາດ ສະບັບນີ້ ໄດ້ຂຽນ ແລະ ຮວບລວມຂໍ້ມູນ ເພື່ອເປັນຄວາມຮູ້ ໃຫ້ແກ່ການຈັດຕັ້ງປະຕິບັດ ໃນການລ້ຽງໄກ່ລາດຂັ້ນພື້ນຖານ ໃຫ້ແກ່ຜູ້ທີ່ສົນໃຈທີ່ຢາກຈະລ້ຽງໄກ່ ແລະ ຜູ້ທີ່ລ້ຽງໄກ່ຢູ່ແລ້ວສາມາດນຳໃຊ້ຂໍ້ມູນທາງເຕັກນິກຈາກປື້ມຫົວນີ້ໄປຈັດຕັ້ງປະຕິບັດເພື່ອການປັບປຸງ-ປ່ຽນແປງທີ່ດີຂຶ້ນ. ຜູ້ຂຽນໄດ້ຄັດຈ້ອນ ແລະ ຮວບລວມຈາກຄວາມຮູ້ທາງດ້ານວິທະຍາສາດ, ຜົນການຄົ້ວຄວ້າຈາກປື້ມຄູ່ມືຫຼາຍໆບ່ອນ ແລະ ຈາກປະສົບການທີ່ໄດ້ຈັດຕັ້ງປະຕິບັດຕົວຈິງມາໄວ້ໃນປື້ມຫົວນີ້ ເຊື່ອແນ່ວ່າຂໍ້ມູນທີ່ມີຢູ່ຈະຊ່ວຍເພີ່ມຄວາມຮູ້ ແລະ ຊ່ວຍແກ້ບັນຫາໃນການລ້ຽງໄກ່ບໍ່ຫຼາຍກໍ່ໜ້ອຍ.

ສຸດທ້າຍນີ້ ຂໍຂອບໃຈເປັນຢ່າງສູງ ມາຍັງພາກສ່ວນທີ່ສະໜັບສະໜູນທາງດ້ານແຫຼ່ງຂໍ້ມູນ, ທາງດ້ານງົບປະມານສຳລັບການຂຽນ ແລະ ການຈັດພິມໃນຄັ້ງນີ້ ຜູ້ຂຽນຫວັງຢ່າງຍິ່ງວ່າຈະໄດ້ຮັບຄຳເຫັນດ້ານຕ່າງໆຈາກບັນດາທ່ານຜູ້ອ່ານເພື່ອນຳໄປປັບປຸງ-ປ່ຽນແປງ ໃຫ້ກາຍເປັນຂໍ້ມູນທາງດ້ານເຕັກນິກການລ້ຽງໄກ່ ທີ່ສົມບູນແບບເໝາະສົມກັບຊາວກະສິກອນໃນຫຼາກຫຼາຍສະພາບເງື່ອນໄຂ ໃນຕໍ່ໜ້າ ທ່ານສາມາດສົ່ງຄວາມຄິດເຫັນ ຫຼື ຕິດຕໍ່ຜູ້ຂຽນໄດ້.

**ອຈ. ຄຳ ພົມມະຈັນ**

ເບີໂທຕິດຕໍ່:020 28121144

ອີເມວ:khamp.laws@yahoo.com

ຄະນະກະເສດສາດ (ວິທະຍາເຂດນາບົງ) ມະຫາວິທະຍາໄລແຫ່ງຊາດ

<table>
<tr><td colspan="2">ອົງປະກອບການຮຽນ</td><td>ໜ້າ: 04</td></tr>
<tr><td colspan="3">ຊື່ອົງປະກອບທີ 1: ຄຸນປະໂຫຍດຂອງການລ້ຽງໄກ່ລາດ</td></tr>
<tr><td>ຊື່ໂມດູນ: ການລ້ຽງໄກ່ລາດ</td><td colspan="2" rowspan="2">ລະຫັດ:</td></tr>
<tr><td>ຊື່ອາຊີບ: ລ້ຽງສັດ</td></tr>
</table>

## ❖ ຈຸດປະສົງ

ເພື່ອໃຫ້ນັກສຶກສາ ຮຽນຮູ້ກ່ຽວກັບຄຸນປະໂຍດ ແລະ ບົດບາດຂອງການລ້ຽງໄກ່ລາດ, ຮູ້ໄດ້ເຖິງຄວາມສ່ຽງ ແລະ ບັນຫາຕ່າງໆ ໃນການລ້ຽງໄກ່ລາດ.

**❖ ພາກສະເໜີ**

ຄວາມຮູ້ເບື້ອງຕົ້ນກ່ຽວກັບຫຼັກການຂອງການລ້ຽງໄກ່ລາດ ເຊິ່ງເນື້ອໃນທີ່ທ່ານຈະໄດ້ຮຽນປະກອບດ້ວຍ ຄຸນປະໂຫຍດຂອງການລ້ຽງໄກ່ລາດ, ປັດໃຈພື້ນຖານຂອງການລ້ຽງໄກ່ລາດ, ສະພາບການລ້ຽງໄກ່ຢູ່ໃນ ສປປ ລາວ.

## 1. <u>ປະໂຫຍດຂອງໄກ່ລາດ</u>

-ໄກ່ເປັນອາຫານສຳລັບຄົນເຮົາບໍລິໂພກໄດ້ທຸກເພດທຸກໄວ ແລະ ຖ້າລ້ຽງໄກ່ເອງ ພາຍໃນຄອບຄົວໂດຍນຳໃຊ້ເສດອາຫານທີ່ມີ ກໍຈະໄດ້ ຊີ້ນໄກ່ ແລະ ໄຂ່ໄກ່ໃນລາຄາຖືກໄວ້ບໍລິໂພກ ໂດຍບໍ່ມີສານເຄມີຕົກຄ້າງ





ໄກ່ລາດສາມາດຟັກໄຂ່ເອງ
ລ້ຽງລູກເອງໄດ້
ໄກ່ລາດສາມາດໃຫ້ໄຂ່ປະມານ 2-4 ຊຸດ/ແມ່/ປີ
ໃຫ້ລູກທີ່ເຫຼືອຕາຍ 5-10 ໂຕ/ແມ່/ຊຸດ
ລູກໄກ່ທີ່ເຫຼືອຕາຍ = ເປັນແຫຼ່ງທາດຊີ້ນໄວ້ບໍລິໂພກ
=ນຳໃຊ້ເຂົ້າໃນວຽກງານທາງສາດສະໜາ, ປະເພນີ
= ແຫຼ່ງລາຍຮັບເພີ່ມ
= ຫຼຸດຜ່ອນລາຍຈ່າຍໄດ້ຈຳນວນໜຶ່ງ



ໄກ່ລາດສາມາດລ້ຽງແບບຂັງ, ແບບເຄິ່ງຂັງເຄິ່ງປ່ອຍ ແລະ ຖ້າລ້ຽງປ່ອຍໃນພື້ນທີ່ກວ້າງຈະບໍ່ເສຍເວລາໃນການຕິດຕາມຫຼາຍ

ໄກ່ລາດສາມາດຊ່ວຍຕົນເອງຊອກຫາອາຫານກິນໄດ້ບາງສ່ວນ ໂດຍສະເພາະກິນເສດອາຫານທີ່ຕົກເຮ່ຍຂອງຄົນ, ຊ່ວຍທຳລາຍວັດສະພືດ ແລະ ກິນແມງໄມ້ຊະນິດຕ່າງໆຕາມບໍລິເວນເດີນບ້ານ

ນອກຈາກນັ້ນໄກ່ລາດຍັງມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ທົນຕໍ່ພະຍາດໄດ້ດີ ນອກຈາກນັ້ນອາຈົມຂອງໄກ່ແມ່ນຝຸ່ນພອຍໄດ້ຢ່າງໜຶ່ງ ສາມາດນຳໄປໃຊ້ເປັນຝຸ່ນໃນການປູກພືດຜັກ, ຕົ້ນໄມ້ກິນໝາກ ແລະ ປູກພືດຊະນິດຕ່າງໆໄດ້ດີ.

## 2. ບັນຫາ ແລະ ຄວາມສ່ຽງໃນການລ້ຽງໄກ່ລາດ

- ບັນຫາຕົ້ນຕໍ ຂອງການລ້ຽງໄກ່ລາດແມ່ນ ໄກ່ນານໃຫຍ່, ໄກ່ສ່ວນຫຼາຍມັກຈະຕາຍຕອນຍັງນ້ອຍ, ມັກເກີດພະຍາດລະບາດ ແລະ ຕາຍຈຳນວນຫຼາຍໃນທຸກໆປີ
- ໄກ່ໄດ້ຮັບອາຫານບໍ່ພຽງພໍຕາມຄວາມຕ້ອງການຂອງຮ່າງກາຍທັງດ້ານປະລິມານ ແລະ ຄຸນນະພາບ ເຮັດໃຫ້ໄກ່ຈ່ອຍຜອມຂາຍບໍ່ໄດ້ລາຄາ
- ພື້ນທີ່ໃນການລ້ຽງໄກ່ລາດແບບປ່ອຍຖືກຈຳກັດແຫຼ່ງອາຫານໄກ່ລາດຕາມທຳມະຊາດນັບມື້ນັບລຸດໜ້ອຍຖອຍລົງ ເຮັດໃຫ້ໄກ່ຂາດສານອາຫານ ແລະ ກິນທຸກຢ່າງທີ່ພົບເຫັນ
- ພະຍາດທີ່ມັກເກີດຂຶ້ນກັບໄກ່ລາດເຊັ່ນ: ນິວຄາເຊິນ, ອະຫິວາສັດປີກ, ຫວັດໜ້າບວມ ນອກນັ້ນຍັງມີ ກາຝາກພາຍນອກ ແລະ ກາຝາກພາຍໃນ ທີ່ສົ່ງຜົນໃຫ້ໄກ່ໃຫຍ່ຊ້າ

ເພື່ອຫຼຸດຜ່ອນບັນຫາດັ່ງກ່າວຕ້ອງໄດ້ປະຕິບັດຕາມເງື່ອນໄຂທາງດ້ານເຕັກນິກຕ່າງໆຄື: ເລືອກສະຖານທີ່ໃຫ້ເໝາະສົມ, ສ້າງລົກຫຼືຄອກໃຫ້ອາກາດຖ່າຍເທໄດ້ສະດວກ, ຄັດເລືອກແນວພັນທີ່ດີຕາມທີ່ຕະຫຼາດຕ້ອງການ, ໃຫ້ອາຫານທີ່ມີຄຸນນະພາບໃນປະລິມານພຽງພໍ, ການຮັກສາສຸຂະພາບສັດທີ່ຖືກຕ້ອງ ແລະ ອື່ນໆຕາມການແນະນຳໃນປຶ້ມເຫຼັ້ມນີ້

ຄອກທີ່ດີ



ຄອກບໍ່ເໝາະສົມ



ຄັດແນວພັນທີ່ດີ



ບໍ່ຄັດພໍ່ແມ່ພັນ



ມີອາຫານທີ່ດີ

ໄກ່ຊອກຫາອາຫານກິນເອງ




ເອົາໃຈໃສ່ຮັກສາສຸຂະພາບສັດ　　　　　ບໍ່ຕິດຕາມສຸຂະພາບສັດ




## 3. ສະພາບຂອງການລ້ຽງໄກ່ລາດ

| ສະພາບການລ້ຽງໄກ່ | ການລ້ຽງຜ່ານມາ | ການລ້ຽງປະຈຸບັນ |
|---|---|---|
| ພາບລວມຂອງການລ້ຽງ | ປ່ອຍປະບໍ່ເອົາໃຈໃສ່ | ເອົາໃຈໃສ່ຕິດຕາມ |
| ຈຳນວນ | ປະລິມານໜ້ອຍ | ປະລິມານຫຼາຍ |
| ແນວພັນ | ຄັດພັນຕາມຕະລາດຕ້ອງການ | ໂຕທີ່ລອດຕາຍ ນຳມາລ້ຽງຕໍ່ |
| ເປົ້າໝາຍການລ້ຽງ | ສຳຮອງອາຫານ/ລາຍຮັບ | ສ້າງລາຍຮັບແບບເປັນເສດຖະກິດ |
| ການຂາຍ | ເທື່ອລະໂຕສອງໂຕ | ຂາຍເປັນຊຸດຊຸດລະຫຼາຍສິບໂຕ |
| ອາຫານທີ່ໃຊ້ | ອາຫນສຳເລັດຮູບຈາກໂຮງງານ<br>ໃຫ້ປະລິມານພຽງພໍຕາມຕ້ອງການ | ໃຫ້ອາຫານປະເພດຣຳບາງຄັ້ງຄາວ<br>ໃຫ້ປະລິມານຕາມສັດທີ່ຫາໄດ້ |
| ສິ່ງເສີມສຸຂະພາບສັດ | ໃຫ້ນ້ຳປະສົມວິຕາມິນ<br>ໃຫ້ອາຫານມີຄຸນນະພາບ | ປ່ອຍສັດຊອກກິນນ້ຳເອງ<br>ໃຫ້ໄກ່ຊອກອາຫານກິນເອງ |
| ການປ້ອງກັນພະຍາດ | ສັກວັກຊີນ | ປ່ອຍລະລະເລີຍ |

ສະພາບຂອງການລ້ຽງ ເມື່ອກ່ອນ　ແລະ　ປັດຈຸບັນ




ລ້ຽງປະລິມານໜ້ອຍ　　　　　ລ້ຽງປະລິມານຫຼາຍ


ໃຫ້ໄກ່ຊອກຫາກິນເອງເປັນຫຼັກ


ໃຫ້ອາຫານເປັນປົກກະຕິ


ລ້ຽງຫຼານລຸ້ນຮ່ວມກັນທະຍອຍຂາຍເທື່ອລະໜ້ອຍ


ລ້ຽງລຸ້ນດຽວກັນຂາຍອອກເປັນຊຸດ.

| ອົງປະກອບການຮຽນ | | ໜ້າ: 07 |
|---|---|---|
| ຊື່ອົງປະກອບທີ 2: ສະຖານທີ່ | | |
| ຊື່ໂມດູນ: ການລ້ຽງໄກ່ລາດ | ລະຫັດ: | |
| ຊື່ອາຊີບ: ລ້ຽງສັດ | | |

## ❖ ຈຸດປະສົງ

ເພື່ອໃຫ້ຜູ້ຮຽນຮູ້ຫຼືຜູ້ເຂົ້າຮ່ວມການຝຶກອົບຮົມ ມີຄວາມເຂົ້າໃຈ ແລະ ສາມາດອະທິບາຍໄດ້ກ່ຽວກັບ ການເລືອກສະຖານທີ່ເພື່ອສ້າງຄອກໄກ່ ແລະ ວິທີການນຳໃຊ້ອຸປະກອບການໃຫ້ນໍ້າ ແລະ ອຸປະກອນການອາຫານໃຫ້ ເຂົ້າໃນການລ້ຽງໄກ່ໄດ້ຢ່າງຖືກຕ້ອງຕາມຫຼັກການລ້ຽງສັດ

### ❖ ວັດສະດຸອຸປະກອນ ແລະ ສື່:

| ລຳດັບ | ລາຍການ | ຄຳອະທິບາຍ | ຈຳນວນ | ຫົວໜ່ວຍ |
|---|---|---|---|---|
| **ອຸປະກອນ ແລະ ເຄື່ອງມື (ຄົງທີ່)** | | | | |
| 1 | ຕຸກໃສ່ນໍ້ານ້ອຍ | ຂະໜາດບັນຈຸ 1 ລິດ | 1 | ຕຸກ |
| 2 | ຕຸກໃສ່ນໍ້າກາງ-ໃຫຍ່ | ຂະໜາດບັນຈຸ 3-5 ລິດ | 1 | ຕຸກ |
| 3 | ຖາດອາຫານ | ສໍາລັບໄກ່ນ້ອຍແຕກໃໝ່ | 1 | ຖາດ |
| 4 | ຮາງອາຫານແບບຍາວ | ສໍາລັບໄກ່ 1 ເດືອນ | 1 | ຮາງ |
| 5 | ຖັງອາຫານແບບແຂວນ | ສໍາລັບໄກ່ລຸ້ນສາວ-ໃຫຍ່ | 1 | ຖັງ |
| 6 | ຕີນລິດໃຫຍ່(ຜ່າເຄິ່ງ) | ສໍາລັບໃສ່ນໍ້າຫຼືອາຫານ | 2 | ອັນ |
| 7 | ກົງໄກ່ນ້ອຍ | ຂະໜາດ 1x1-5 ແມັດ | 1 | ກົງ |
| 8 | ຄອກໄກ່ | ເພື່ອເປັນຕົວຢ່າງ | 1 | ຫຼັງ |
| **ສື່ການຮຽນ-ການສອນ** | | | | |
| 1 | ພາວເວີພ້ອຍ | ການຮຽນ-ການສອນ | 1 | ບົດ |
| 2 | ພື້ນທີ່ລ້ຽງຕົວຈິງ | ລົງເບິ່ງພາກສະໜາມ | 2 | ຈຸດ |

### ❖ ສະຖານທີ່

ຄວາມຮູ້ເບື້ອງຕົ້ນກ່ຽວກັບສະຖານທີ່ການລ້ຽງໄກ່ລາດ ເຊິ່ງເນື້ອໃນທີ່ທ່ານຈະໄດ້ຮຽນປະກອບດ້ວຍ ການເລືອກພື້ນທີ່ໃນການປູກສ້າງຄອກ, ລັກສະນະ ແລະ ຂະໜາດຂອງຄອກໄກ່ ພ້ອມທັງການເລືອກນຳໃຊ້ອຸປະກອນໃຫ້ນໍ້າ ແລະ ໃຫ້ອາຫານທີ່ເໝາະສົມກັບຈຳນວນໄກ່ທີ່ລ້ຽງ

## 1. <u>ການຄັດເລືອກສະຖານທີ່</u>

ການລ້ຽງໄກ່ລາດ ສາມາດລ້ຽງແບບປ່ອຍ, ລ້ຽງແບບເຄິ່ງຂັງເຄິ່ງປ່ອຍ ແລະ ລ້ຽງແບບຂັງກົງ ຫຼືລ້ຽງພາຍໃນຄອກ ແຕ່ຖ້າລ້ຽງແບບຂັງກົງຫຼືລ້ຽງໃນຄອກຕະລອດມີໂອກາດໄດ້ກຳໄລບໍ່ຫຼາຍ ເພາະການລ້ຽງໄກ່ລາດແບບຂັງກົງຕະລອດກວ່າຈະໄດ້ນໍ້າໜັກ 1 ກິໂລກຼາມ ຕ້ອງໃຊ້ອາຫານ 5-7 ກິໂລກຼາມ ຫຼື ອາດຈະຫຼາຍກວ່ານັ້ນ



ຮູບແບບຂອງການລ້ຽງຂັງໃນກົງ ແລະ ໃນຄອກຕະລອດ

ດັ່ງນັ້ນການລ້ຽງໄກ່ລາດທີ່ດີຄວນມີພື້ນທີ່ກວ້າງຂວາງພໍສົມຄວນ ແລະ ເປັນພື້ນທີ່ດັ່ງນີ້:

- ເປັນພື້ນທີ່ເປັນໂຄກ (ເປັນໂນນ) ບໍ່ມີນ້ຳຖ້ວມຂັງ, ເວລາຝົນຕົກດິນຊຶມຊັບນ້ຳ ແລະ ລະບາຍນ້ຳໄດ້ດີ,
- ພື້ນທີ່ບໍ່ຮົກເຮື້ອຈົນເກີນໄປ ແຕ່ກໍຄວນມີຕົ້ນໄມ້ພໍເປັນຮົ່ມເງົາໃຫ້ໄກ່ຊົ້ນແດດ, ຊົ້ນຝົນ
- ເປັນພື້ນທີ່ທີ່ມີຫຍ້າທຳມະຊາດໃຫ້ໄກ່ໄດ້ກິນໃບຫຍ້າ ແລະ ແກ່ນຫຍ້າ,
- ເປັນບໍລິເວນທີ່ມີລົມລອງ ມີແສງແດດສ່ອງເຖິງ
- ເປັນພື້ນທີ່ທີ່ບໍ່ເຄີຍເກີດການລະບາດຂອງພະຍາດມາກ່ອນ



ລັກສະນະຂອງພື້ນທີ່ກວ້າງຂວາງ-ຮົ່ມເງົາ

ຖ້າຈະລ້ຽງໄກ່ເປັນຈຳນວນຫຼາຍ ຫຼື ລ້ຽງແບບເປັນຟາມ ຄວນຈະຢູ່ ຫ່າງໄກຈາກຊຸມຊົນ (ປ້ອງກັນການລະບາດຂອງເຊື້ອພະຍາດ), ຈະຕ້ອງມີນ້ຳທີ່ສະອາດເພື່ອໃຫ້ໄກ່ໄດ້ກິນ ແລະລ້າງອຸປະກອນຮັບໃຊ້ໃຫ້ສະອາດ, ມີລະບົບໄຟຟ້າ ແລະ ທົນທາງເຂົ້າອອກທີ່ສະດວກ.

## 2. ລັກສະນະຂອງຄອກ (ລົກ) ໄກ່

ຄອກເປັນບ່ອນໃຫ້ໄກ່ໄດ້ພັກອາໄສ, ເປັນບ່ອນຫຼັບນອນ, ຊ່ວຍໃນການປ້ອງກັນສັດຕູໄກ່, ປ້ອງກັນການລະບາດຂອງເຊື້ອພະຍາດ, ຊ່ວຍຝຶກໃຫ້ໄກ່ຄຸ້ນສາມາດຈັບໄດ້ງ່າຍໃນເວລາຕ້ອງການໃຫ້ວັກຊີນ ແລະ ປິ່ນປົວສັດເຈັບ.

ຄອກທີ່ດີຕ້ອງສາມາດກັນແດດ, ກັນຝົນ, ກັນລົມແຮງໄດ້

ຄອກຕ້ອງຕັ້ງສະຫຼຽງຕາມແນວຕາເວັນອອກ-ຕາເວັນຕົກເພື່ອບໍ່ໃຫ້ແສງແດດສ່ອງເຂົ້າໃນຄອກຫຼາຍຈົນເກີນໄປ

ພື້ນຄອກຄວນສູງກວ່າໜ້າດິນຂ້າງນອກ ແລະ ຕຳໃຫ້ແໜ້ນ ຫຼື ເທພື້ນດ້ວຍສີມັງ, ເພື່ອຊ່ວຍເຮັດໃຫ້ການອະນາໄມງ່າຍ ແລະ ພື້ນຄອກແຫ້ງ ແນະນຳໃຫ້ໃຊ້ວັດສະດຸປະເພດຂີ້ແກບ, ຂີ້ເລື່ອຍ ຫຼື ຂີ້ກົບ ຮອງພື້ນຕື່ມ ໂດຍໃຫ້ ໜາປະມານ 5-10 ຊັງຕີແມັດ.

ຝາຂ້າງຕ້ອງເຮັດຖີ່, ແໜ້ນໜາ ແລະ ແຈບດີ ຫຼື ກໍ່ໃຫ້ສູງປະມານ 50-70 ຊັງຕີແມັດ ສ່ວນທີ່ເຫຼືອເຮັດຫ່າງເລັກໜ້ອຍ ເພື່ອໃຫ້ອາກາດຖ່າຍເທສະດວກບໍ່ໃຫ້ພາຍໃນຄອກອົບເອົ້າ, ສາມາດນຳໃຊ້ວັດຖຸດິບປະເພດໄມ້ປ່ອງ, ໄມ້ດິ້ວ, ກະແຕະ, ຕາໜ່າງເຫຼັກ

ຫຼັງຄາສາມາດນຳໃຊ້ວັດຖຸດິບທີ່ຫາໄດ້ພາຍໃນທ້ອງຖິ່ນ, ຖ້າຈະມຸງດ້ວຍຫຍ້າຄາຕ້ອງຊັນກວ່າມຸງດ້ວຍວັດສະດຸຢ່າງອື່ນເພື່ອປ້ອງກັນຝົນຮົ່ວ, ປາຍສາຍຄາຄວນມີຄວາມສູງຢ່າງໜ້ອຍ 1,50 ແມັດ ແລະ ຫ່າງຈາກໂຕຄອກ 1,00 ແມັດ

ຄອກຄວນມີປະຕູທີ່ສາມາດເຂົ້າອອກໄດ້ສະດວກ ຫຼື ສາມາດເຮັດເປັນ ສອງປະຕູຄື: ປະຕູນ້ອຍສຳລັບໄກ່ເຂົ້າອອກ ສ່ວນປະຕູໃຫຍ່ສຳລັບເວລາຄົນຈະເຂົ້າໄປອະນາໄມທຳຄວາມສະອາດຄອກໄກ່

ຂະໜາດຂອງຄອກຂຶ້ນກັບຈຳນວນໄກ່ທີ່ຈະລ້ຽງ ເພາະຖ້າລ້ຽງໜາແໜ້ນ ຫຼື ແອອັດຫຼາຍ ຈະເຮັດໃຫ້ໄກ່ຄຽດເກີດການຈິກຕອດກັນ ລວງທັງການຍາດຊີງອາຫານກັນ ເຮັດໃຫ້ໄກ່ເກີດບາດເຈັບໄດ້

ອັດຕາສ່ວນພື້ນທີ່ຄອກ ໃນການລ້ຽງໄກ່

| ລຳດັບ | ອາຍຸໄກ່(ອາທິດ) | ຈຳນວນໄກ່ (ໂຕ/ຕາແມັດ) |
|---|---|---|
| 1 | 0 - 3 | 10 - 12 |
| 2 | 4 - 6 | 8 - 10 |
| 3 | 7 - 14 | 6 - 7 |
| 4 | 15 - 20 | 5 - 6 |
| 5 | 21 - ຂາຍ | 5 |

ໃນການສ້າງຄອກຄວນຄິດເຖິງວັດຖຸດິບທີ່ຫາໄດ້ງ່າຍ ແລະ ມີພາຍໃນທ້ອງຖິ່ນ ເພື່ອໃຫ້ງ່າຍໃນການຊອກຫາ ແລະ ຄ່າໃຊ້ຈ່າຍບໍ່ສູງ. ໂດຍທົ່ວໄປສາມາດແບ່ງອອກເປັນ 4 ຮູບແບບດັ່ງນີ້:

**1. ແບບເພີງໝາແຫງນ**




ລັກສະນະຂອງຄອກແມ່ນເປັນເທີບ, ປຸກງ່າຍບໍ່ຊັບຊ້ອນ

ສາມາດຂັ້ນລະຫວ່າງຄອກກັບສັງກະສີ ເພື່ອເປັນບ່ອນວາງຮັງໄຂ່

ເໝາະສົມກັບລ້ຽງໄກ່ໜ້ອຍໂຕ, ທຶນບໍ່ຫຼາຍ

ຝົນສາມາດຜະເຂົ້າໃນຄອກໄດ້ງ່າຍ

**2. ແບບເພີ້ມໝາແຫງນກາຍ**

ລັກສະນະຄອກຄ້າຍຄືຄອກແບບເພີງໝາແຫງນ ແຕ່ມີເທີບດ້ານໜ້າສັ້ນໆ ເທີບທີ່ຕໍ່ອອກມາມີປະໂຫຍດ ປ້ອງກັນແດດ, ປ້ອງກັນຝົນ ແລະ ການລະບາຍຄວາມຮ້ອນພາຍໃນຄອກໄດ້ດີ
ນຳໃຊ້ເປັນບ່ອນໃຫ້ນ້ຳ, ໃຫ້ອາຫານສັດເວລາຝົນຕົກ




**3. ແບບໜ້າຈົ່ວ**




ການປຸກສ້າງຄອກແບບໜ້າຈົວນີ້ຈະຊັບຊ້ອນແລະ ສາມາດດັດແປງເຮັດເທີບທາງສີໜ້າ ຫຼື ເຮັດຂ້າງໃດຂ້າງໜຶ່ງຍາວກວ່າປົກກະຕິເພື່ອໄວ້ອຸປະກອນໃຫ້ນ້ຳ, ໃຫ້ອາຫານເວລາຝົນຕົກ, ສ້າງຄອກລ້ຽງໄກ່ນ້ອຍໃສ່ກໍດີ

ຄອກແບບນີ້ສາມາດປ້ອງກັນແດດ, ປ້ອງກັນຝົນ ແລະ ປ້ອງກັນຝົນສາດໄດ້ດີກວ່າ ແຕ່ການໃຊ້ຈ່າຍກໍ່ເພີ່ມຕື່ມອີກ ສາມາດນຳໃຊ້ລ້ຽງໄກ່ແບບຂັງພາຍໃນຄອກຕະລອດກໍໄດ້.

**4. ແບບໜ້າຈົ່ວສອງຊັ້ນ**

ລັກສະນະຂອງຄອກຄ້າຍຄືກັບແບບໜ້າຈົວຈະຕ່າງສ່ວນຫຼັງຄາ ຊ່ອງຫວ່າງຂອງຫຼັງຄາຊັ້ນທີໜຶ່ງແລະຊັ້ນທີສອງສາມາດລະບາຍອາກາດຮ້ອນໄດ້ດີ ໃຊ້ງົບໃນການເຮັດຫຼັງຄາເພີ່ມຂຶ້ນ ການສ້າງຄອກແບບນີ້ເໝາະສົມສຳລັບການລ້ຽງໄກ່ຈຳນວນຫຼາຍ  ແລະ ລ້ຽງຂັງພາຍໃນຄອກ.



## 3 ອຸປະກອນທີ່ຮັບໃຊ້ໃນການລ້ຽງໄກ່

### 3.1 ອຸປະກອນໃນການໃຫ້ນໍ້າ

ການລ້ຽງໄກ່ບໍ່ວ່າຈະເປັນການລ້ຽງຂັງພາຍໃນຄອກ ຫຼື ລ້ຽງປ່ອຍ ຜູ້ລ້ຽງຈຳເປັນຕ້ອງໄດ້ຈັດຫາອຸປະກອນໃສ່ນໍ້າໃຫ້ໄກ່ກິນຢ່າງເໝາະສົມ

- ຕ້ອງເປັນນໍ້າທີ່ສະອາດ ແລະ ມີໄວ້ໃຫ້ໄກ່ຕະລອດຢ່າງພຽງພໍ
- ເລືອກໃຊ້ອຸປະກອນທີ່ໃສ່ນໍ້າໃຫ້ເໝາະສົມກັບອາຍຸຂອງໄກ່ແຕ່ລະໄລຍະ ຮັບປະກັນບໍ່ໃຫ້ໄກ່ນ້ອຍຕົກນໍ້າ,
- ບໍ່ໃຫ້ນໍ້າລົ້ນ ຫຼື ຂ້ວມ ເພາະຈະເຮັດໃຫ້ພື້ນຄອກປຽກຊຸ່ມ
- ສິ່ງສຳຄັນຄວນມີການອະນາໄມໃຫ້ອຸປະກອນສະອາດຢູ່ສະເໝີ
- ເວລາອາກາດປ່ຽນແປງກະທັນຫັນ, ໄກ່ຕື່ນຕົກໃຈ ຄວນປະສົມຢາວິດຕະມິນໃສ່ນໍ້າໃຫ້ໄກ່ກິນ




ບ່ອນໃສ່ນໍ້າແບບຕຸກ20-25ໂຕ/ຕຸກບ່ອນໃສ່ນໍ້າແບບມີເດືອຍຕອດກິນ 8ໂຕ/ຈຸດ




ບ່ອນໃສ່ນໍ້າແບບຕັດແປງ 10-15ຊັງຕີແມັດ/ໂຕ

### 3.2. ອຸປະກອນໃນການໃຫ້ອາຫານ

ນິໄສຂອງໄກ່ພື້ນເມືອງມັກຂວັດເຂ່ຍ ຈຳເປັນຕ້ອງມີອຸປະກອນສຳລັບໃສ່ອາຫານໄວ້ໃຫ້ໄກ່ກິນ ສາມາດເລືອກໃຊ້ອຸປະກອນແບບໃດກະໄດ້ ແຕ່ຕ້ອງຮັບປະກັນສາມາດປ້ອງກັນບໍ່ໃຫ້ອາຫານສູນເສຍຈາກການຂວັດເຂ່ຍຂອງໄກ່ພ້ອມທັງສາມາດປ້ອງກັນການປົນເປື້ອນຂອງອາຫານຈາກຂີ້ຝຸ່ນ ແລະ ພື້ນຄອກ.

ອຸປະກອນທີ່ໃສ່ອາຫານໃຫ້ໄກ່ທີ່ວາງຂາຍກັນທົ່ວໄປມີຫຼາຍຊະນິດ ມີຫຼາຍຂະໜາດ ເລືອກໃຊ້ຕາມອາຍຸໄກ່ ແລະ ຈໍານວນໂຕໄກ່ເຊັ່ນ: ເປັນພາຖາດ, ເປັນແບບຮາງຍາວ ເປັນແບບຖັງແຂວນ ຫຼື ດັດແປງຈາກວັດຖຸທີ່ຫາໄດ້ງ່າຍໃນທ້ອງຖິ່ນເຊັ່ນ: ນໍາໃຊ້ຕີນລົດເກົ່າມາປາດຜ່າເຄິ່ງ ຫຼື ນໍາໃຊ້ໄມ້ປ່ອງທີ່ມີຂະໜາດໃຫຍ່ມາເຮັດເປັນຮາງຍາວ

ການເລືອກນໍາໃຊ້ອຸປະກອນ ໃຫ້ຄິດເຖິງການຮັກສາຄວາມສະອາດ ແລະ ຈໍານວນໄກ່ທີ່ລ້ຽງ ຊຶ່ງຕາມຫຼັກການແລ້ວຈະຕ້ອງມີພຽງພໍໃຫ້ກັບການເຂົ້າກິນຂອງໄກ່ທຸກໂຕດັ່ງຕາຕະລາງລຸ່ມນີ້:

ສັດສ່ວນຂອງການນໍາໃຊ້ອຸປະກອນໃສ່ອາຫານ

| ອາຍຸໄກ່ (ອາທິດ) | ຮາງອາຫານ ແບບຖາດ | ຮາງອາຫານ ແບບຮາງຍາວ | ຮາງອາຫານແບບ ຖັງແຂວນ |
|---|---|---|---|
| 0-2 | 30 ໂຕ/ຖາດ | 3-5 ຊັງຕີແມັດ/ໂຕ | 20-25 ໂຕ/ຖັງ |
| 3-6 | 15 ໂຕ/ຖາດ | 5 ຊັງຕີແມັດ/ໂຕ | 20-25 ໂຕ/ຖັງ |
| 7-18 | 10 ໂຕ/ຖາດ | 8 ຊັງຕີແມັດ/ໂຕ | 15-17 ໂຕ/ຖາດ |
| 18 ຂຶ້ນໄປ | 2-5 ໂຕ/ຖາດ | 8 ຊັງຕີແມັດ/ໂຕ | 15-17 ໂຕ/ຖາດ |





ບ່ອນໃສ່ອາຫານແບບຖາດບ່ອນໃສ່ອາຫານແບບຮາງຍາວ







ບ່ອນໃສ່ອາຫານແບບຖັງແຂວນບ່ອນໃສ່ອາຫານແບບດັດແປງ



ບ່ອນໃສ່ອາຫານແບບດັດແປງ

ຈະນຳໃຊ້ອຸປະກອນແບບໃດໃນການໃສ່ນ້ຳ ແລະ ໃສ່ອາຫານໃຫ້ໄກ່ກິນ ສິ່ງສຳຄັນແມ່ນພື້ນທີ່ໃນການເຂົ້າກິນຂອງໄກ່ຈະຕ້ອງກວ້າງພໍທີ່ໄກ່ທຸກໂຕສາມາດເຂົ້າກິນໄດ້ພ້ອມກັນ.

<table>
<tr><td colspan="2">ອົງປະກອບການຮຽນ</td><td>ໜ້າ: 05</td></tr>
<tr><td colspan="3">ຊື່ອົງປະກອບທີ 3: ແນວພັນ</td></tr>
<tr><td>ຊື່ໂມດູນ: ການລ້ຽງໄກ່ລາດ</td><td colspan="2" rowspan="2">ລະຫັດ:</td></tr>
<tr><td>ຊື່ອາຊີບ: ລ້ຽງສັດ</td></tr>
</table>

## ❖ ຈຸດປະສົງ

ເພື່ອໃຫ້ຜູ້ຮຽນມີຄວາມເຂົ້າໃຈ ແລະ ສາມາດອະທິບາຍໄດ້ເຖິງພັນໄກ່ຊະນິດຕ່າງໆ ທີ່ນິຍົມລ້ຽງກັນທົ່ວໄປ ໃນ ສປປລາວ ແລະ ຫຼັກການຄັດເລືອກແນວພັນ ເພື່ອນຳໃຊ້ເຂົ້າໃນການລ້ຽງໄກ່ຖືກຕ້ອງຕາມຄູ່ມື

### ❖ ວັດສະດຸອຸປະກອນ ແລະ ສື່:

| ລຳດັບ | ລາຍການ | ຄຳອະທິບາຍ | ຈຳນວນ | ຫົວໜ່ວຍ |
|---|---|---|---|---|
| 1 | ພາວເວີ້ພ້ອຍ | ການຮຽນ-ການສອນ | 1 | ບົດ |
| 2 | ພື້ນທີ່ລ້ຽງຕົວຈິງ | ລົງເບິ່ງພາກສະໜາມ | 2 | ຈຸດ |

### ❖ ແນວພັນ

ຄວາມຮູ້ເບື້ອງຕົ້ນກ່ຽວກັບແນວພັນໄກ່ ເຊິ່ງເນື້ອໃນທີ່ທ່ານຈະໄດ້ຮຽນປະກອບດ້ວຍ ຊະນິດແນວພັນໄກ່ທີ່ໃຊ້ລ້ຽງກັນທົ່ວໄປໃນ ສປປລາວ, ການຄັດເລືອກໄກ່ພໍ່ພັນ, ການຄັດເລືອກໄກ່ແມ່ພັນ, ການຄັດເລືອກໄກ່ນ້ອຍເຂົ້າມາລ້ຽງ ແລະ ການຄັດໄກ່ອອກ

ໄກ່ທີ່ລ້ຽງກັນທົ່ວໄປ ມີຫຼາກຫຼາຍສາຍພັນສັງເກດໄດ້ຈາກສີຂອງແຂ່ງ, ສີສັນຂອງຂົນ ແລະ ລັກສະນະຂອງຫອນເຊັ່ນ: ໄກ່ແຈ້, ໄກ່ອູ, ໄກ່ເຕັ້ຍ, ໄກ່ຕີ, ໄກ່ດູກດຳ ແລະ ອື່ນໆ


ໄກ່ແຈ້,


ໄກ່ອູ,


ໄກ່ເຕັ້ຍ


ໄກ່ຕີ,


ໄກ່ດູກດຳ


ໄກ່ຕຳຮ່ອງ







ໄກ່ສາຍພັນອື່ນໆ ໄກ່ລາດທີ່ລ້ຽງທົ່ວໄປ

ຄຽງຄູ່ກັບໄກ່ລາດໄກ່ພື້ນເມືອງແລ້ວ ຍັງໄດ້ມີການນຳໄກ່ບາງສາຍພັນທີ່ນຳເຂົ້າມາລ້ຽງ ເພື່ອປັບປຸງເປັນໄກ່ລູກປະສົມ

ຂໍ້ດີຂອງໄກ່ລູກປະສົມ ມີຮູບຮ່າງຄ້າຍຄືໄກ່ລາດ, ຊີ້ນອ່ອນນຸ້ມກວ່າໄກ່ລາດ, ກິນອາການບໍ່ເລືອກ, ທົນຕໍ່ສະພາບອາກາດຮ້ອນໄດ້ດີ, ໃຊ້ເວລາລ້ຽງ 3-4 ເດືອນ ໄດ້ນ້ຳໜັກ 1.5 ກິໂລກຼາມ/ໂຕ, ແຕ່ເມື່ອນຳໄປລ້ຽງເປັນພໍ່-ແມ່ພັນ ຄຸນນະພາບຂອງລູກຈະລຸດລົງ, ປະມານໜຶ່ງໃນສິບຈະລ້ຽງບໍ່ໃຫຍ່, ຖ້າຂາດອາຫານໄກ່ຈະຈ່ອຍຜອມ ແລະ ຈິກຕອດກັນ ເນື່ອງຈາກການຊອກຫາກິນອາຫານທຳມະຊາດບໍ່ເກັ່ງຄືໄກ່ລາດ

ການຄັດເລືອກເອົາໄກ່ລັກສະນະແບບໃດ ຫຼື ໄກ່ສາຍພັນໃດເຂົ້າມາລ້ຽງ ແມ່ນຂຶ້ນກັບຈຸດປະສົງຫຼືເປົ້າໝາຍຂອງຜູ້ລ້ຽງເປັນຫຼັກ ວ່າຈະລ້ຽງເພື່ອຄວາມສວຍງາມ, ລ້ຽງເພື່ອຜະລິດລູກໄກ່ຂາຍ, ລ້ຽງເພື່ອການກິລາ ຫຼື ຈະລ້ຽງໄວ້ເປັນແຫຼ່ງອາຫານປະເພດທາດຊີ້ນ








ລ້ຽງເພື່ອສວຍງາມ







ລ້ຽງເພື່ອຜະລິດລູກ ລ້ຽງເພື່ອການກິລາ

ບໍ່ວ່າການລ້ຽງຈະມີເປົ້າໝາຍເພື່ອຫຍັງ ການຄັດໄກ່ເຂົ້າມາລ້ຽງຈະຕ້ອງຄຳນຶງເຖິງຫຼາຍປັດໄຈເຊັ່ນ: ປະຫວັດຂອງຄອກ ຫຼື ຟາມທີ່ລ້ຽງວ່າເຄີຍເປັນພະຍາດມາກ່ອນຫຼືບໍ່, ລ້ຽງໄປແລ້ວໄກ່ມີຄວາມທົນຕໍ່ສະພາບອາກາດຮ້ອນເອົ້າ

ແລະ ພະຍາດຄືແນວໃດ, ໄກ່ມີລັກສະນະຖ້າກິນແຕ່ນຳຄົນ ຫຼື ຫາກິນເອງບາງສ່ວນ, ແມ່ໄກ່ເຄີຍໃຫ້ໄຂ່ຫຼາຍບໍ່, ມີນິໄສຟັກໄຂ່ບໍ່, ອັດຕາການລ້ຽງລູກລອດຕາຍເປັນແນວໃດ, ລ້ຽງດົນປານໃດຈຶ່ງສາມາດຂາຍໄດ້.

## 1. ການຄັດເລືອກໄກ່ພໍ່ພັນ

ໄກ່ຜູ້ທີ່ຈະເປັນພໍ່ພັນໄດ້ຕ້ອງມີອາຍຸຢ່າງໜ້ອຍ 8-10 ເດືອນ ຈຶ່ງຈະເຮັດໃຫ້ລູກທີ່ເກີດອອກມາສົມບູນ ແລະ ແຂງແຮງ, ມີລັກສະນະຜ່າເຜີຍບໍ່ເປັນໄກ່ຂີ້ຢ້ານ, ບໍ່ເປັນໂຕທີ່ນ້ອຍຄອດ, ພໍ່ພັນທີ່ດີຕ້ອງມີຮູບຮ່າງໃຫຍ່, ຂົນຫຼາຍ, ໃຫຍ່ໄວ, ຂາແຂງແຮງ, ຊອກຫາກິນເກັ່ງ, ຫອນ ແລະ ຕ້າງສີແດງສົດໃສ, ບໍ່ຈິກຕອດໄກ່ນ້ອຍ



## 2. ການຄັດເລືອກໄກ່ແມ່ພັນ

ການທີ່ຈະຄັດເອົາໄກ່ລຸ້ນມາໄວ້ເປັນໄກ່ແມ່ພັນດີແທ້ຄວນຄັດເອົາໄວ້ຕັ້ງແຕ່ອາຍຸ 6-7 ເດືອນ, ຊຶ່ງແຕ່ລະສາຍພັນຈະມີລັກສະນະທີ່ຊັດເຈນຂອງແຕ່ລະສາຍພັນ ໂດຍລວມແລ້ວໃຫ້ເລືອກເອົາໂຕທີ່ມີຮູບຮ່າງໃຫຍ່, ຂົນຫຼາຍ, ໃຫຍ່ໄວ, ແຂງແຮງ, ຊອກຫາກິນເກັ່ງ, ຫອນ ແລະ ຕ້າງສີແດງສົດໃສ, ເລືອກຈາກຄອກ ທີ່ມີປະຫວັດໃຫ້ໄຂ່ຫຼາຍ, ຟັກໄຂ່ດີ ລ້ຽງລູກເກັ່ງ ສິ່ງສຳຄັນຕ້ອງບໍ່ມາຈາກຝູງທີ່ເຄີຍເກີດພະຍາດມາກ່ອນ.



ລັກສະນະຂອງໄກ່ແມ່ທີ່ດີ

## 3. ການຄັດເລືອກໄກ່ນ້ອຍ

ໃນການເລືອກໄກ່ນ້ອຍ ເຂົ້າມາລ້ຽງ ໝາຍເຖິງໄກ່ທີ່ນຳອອກຈາກຕູ້ຟັກ ຫຼື ໄກ່ອາຍຸປະມານ 3-7ມື້ ເພາະໄກ່ອາຍຸນີ້ຈະມີລາຄາຖືກ ແລະ ປັບໂຕເຂົ້າກັບສະພາບຂອງການລ້ຽງໄດ້ດີ ຄວນເລືອກເອົາໂຕທີ່ແຂງແຮງ, ຂົນແຫ້ງດີ, ດວງຕາແຈ່ມໃສ, ບໍ່ຊຶມເສົ້າ, ບໍ່ພິການ, ອະໄວຍະວະຄົບຖ້ວນສົມບູນ, ແຕ່ຖ້າເປັນໄກ່ລຸ້ນປະມານ 2 ຫາ 5 ເດືອນ ກໍຄວນເປັນໂຕທີ່ແຂງແຮງ, ຈະເລີນເຕີບໂຕໄວ ບໍ່ມີລັກສະນະນ້ອຍຄອດ, ອະໄວຍະວະຄົບຖ້ວນ ແລະ ສົມບູນ, ຄວນຄັດເລືອກຈາກຄອກ ທີ່ມີປະຫວັດໃຫຍ່ໄວ, ແມ່ໄກ່ໃຫ້ໄຂ່ຫຼາຍ, ລ້ຽງລູກດີ, ຊອກຫາກິນເກັ່ງ ແລະ ບໍ່ເຄີຍເກີດພະຍາດມາກ່ອນ.





## 4. ຂໍ້ຫ້າມ ແລະ ການຄັດໄກ່

ຢາກໃຫ້ການລ້ຽງໄກ່ມີຄວາມສ່ຽງໜ້ອຍ ແຕ່ມີຜົນສຳເລັດດີ ຈຳເປັນຕ້ອງເອົາໃຈໃສ່ລາຍລະອຽດແຕ່ລະຂັ້ນຕອນ ໂດຍສະເພາະຂັ້ນຕອນການຄັດໄກ່ເຂົ້າລ້ຽງ ຖ້າຄັດໄກ່ເຂົ້າມາດີ ໂອກາດຈະປະສົບຜົນສຳເລັດມີສູງ. ສິ່ງທີ່ຄວນເອົາໃຈໃສ່ໃນການຄັດເລືອກໄກ່ມີດັ່ງນີ້:

- ບໍ່ຄວນຊື້ໄກ່ຈາກຕະລາດມາລ້ຽງ ເພາະໄກ່ອາດຕິດເຊື້ອພະຍາດມາກ່ອນແລ້ວແຕ່ບໍ່ສະແດງອາການ ຖ້າຫາກຈຳເປັນຕ້ອງຊື້ຈາກຕະລາດມາລ້ຽງ ແນະນຳໃຫ້ມີການຂັງແຍກຫ່າງຈາກຝູງທີ່ລ້ຽງຢ່າງໜ້ອຍ 7 ມື້ ຖ້າບໍ່ສະແດງອາການຫຍັງຈຶ່ງປ່ອຍລ້ຽງພາຍໃນຝູງ.
- ບໍ່ຄວນນຳໄກ່ຈາກຫຼາຍຄອກ, ຫຼາຍຟາມມາລ້ຽງຮ່ວມກັນ ເພາະອາດເປັນການນຳເຊື້ອພະຍາດຈາກຄອກ ຈາກຟາມຫຼາຍບ່ອນມາໄວ້ພາຍໃນຄອກ ຫຼື ຟາມຂອງເຮົາ
- ບໍ່ຄວນນຳໃຊ້ພໍ່ພັນເກີນ 3 ປີ ເພາະຈະເຮັດໃຫ້ເກີດການປະສົມພັນສາຍເລືອດໃກ້ກັນ ແລ້ວລູກຈະອ່ອນແອ, ຫຼາຍໂຕນານໃຫຍ່, ຕິດເຊື້ອພະຍາດງ່າຍ ຕ້ອງປ່ຽນພໍ່ພັນທຸກໆ 3 ປີ
- ບໍ່ຄວນນຳໄກ່ເຫງົາ, ໄກ່ປ່ວຍ ເຂົ້າມາກິນໃນບໍລິເວນບ້ານ ຫຼື ໃກ້ກັບສະຖານທີ່ລ້ຽງໄກ່
- ບໍ່ຄວນນຳໄກ່ທີ່ລອດຕາຍຈາກເຊື້ອພະຍາດປີທີ່ຜ່ານມາເຂົ້າມາລ້ຽງເປັນພໍ່ແມ່ພັນ ເພາະຈະເປັນການນຳເອົາເຊື້ອພະຍາດມາປ່ອຍໄວ້ໃຫ້ລະບາດພາຍໃນຄອກສັດຂອງເຮົາ

ການຈັດການຝູງໄກ່ໃຫ້ມີຄວາມເໝາະສົມຕໍ່ພື້ນທີ່ ແລະ ເໝາະສົມກັບປະລິມານອາຫານທີ່ມີ ຈະຊ່ວຍໃຫ້ການລ້ຽງໄກ່ປະສົບຜົນສຳເລັດ ໄກ່ທີ່ຄວນຄັດອອກເຊັ່ນ:

- ໄກ່ທີ່ຂີ້ຍ້ານບໍ່ກ້າເຂົ້າກິນອາຫານພ້ອມໝູ່ ມີໂອກາດຈ່ອຍ-ນ້ອຍຄອດນານໃຫຍ່
- ໄກ່ຂີ້ຄ້ານຖ້າກິນແຕ່ນຳຄົນ, ໄກ່ທີ່ມີລັກສະນະນ້ອຍຄອດ, ຈ່ອຍຜອມ
- ໄກ່ທີ່ມັກຈິກຕອດໂຕອື່ນ ແລະ ມັກຈິກຕອດໄຂ່,
- ໄກ່ທີ່ບໍ່ມັກຟັກໄຂ່, ໄກ່ທີ່ລ້ຽງລູກບໍ່ດີ, ໄກ່ທີ່ມີອາຍຸຫຼາຍເກີນ 3ປີ
- ໃນຊ່ວງຕົ້ນລະດູຝົນຄວນຄັດໄກ່ທີ່ມີອາຍຸຫຼາຍອອກ, ຄັດໂຕທີ່ບໍ່ສົມບູນ-ບໍ່ງາມອອກ ຈຶ່ງໄວ້ແຕ່ໄກ່ນຸ່ມໄກ່ສາວເພື່ອຈະໄດ້ຜົນຜະລິດໃນຊ່ວງທ້າຍລະດູຝົນ

| ອົງປະກອບການຮຽນ | | ໜ້າ: 05 |
|---|---|---|
| ຊື່ອົງປະກອບທີ 4: ອາຫານ | | |
| ຊື່ໂມດູນ: ການລ້ຽງໄກ່ລາດ | ລະຫັດ: | |
| ຊື່ອາຊີບ: ລ້ຽງສັດ | | |

## ❖ ຈຸດປະສົງ

ເພື່ອໃຫ້ຜູ້ຮຽນມີຄວາມເຂົ້າໃຈ ແລະ ສາມາດດຳເນີນການປະສົມອາຫານ ແລະ ສາມາດໃຫ້ອາຫານໄກ່ໄດ້ຖືກຕ້ອງຕາມຫຼັກການການໃຫ້ອາຫານໄກ່ທີ່ກຳນົດໄວ້,

### ❖ ວັດສະດຸອຸປະກອນ ແລະ ສື່:

| ລຳດັບ | ລາຍການ | ຄຳອະທິບາຍ | ຈຳນວນ | ຫົວໜ່ວຍ |
|---|---|---|---|---|
| **ອຸປະກອນ ແລະ ເຄື່ອງມື** | | | | |
| 1 | ອາຫານສຳເລັດຮູບສຳລັບໄກ່ນ້ອຍ | ສ່ວນປະສົມໃນອາຫານ | 300 | ກຼາມ/ຄົນ |
| 2 | ຮຳ | ສ່ວນປະສົມໃນອາຫານ | 350 | ກຼາມ/ຄົນ |
| 3 | ສາລີບົດ | ສ່ວນປະສົມໃນອາຫານ | 300 | ກຼາມ/ຄົນ |
| 4 | ໃບມັນຕົ້ນແຫ້ງບົດ | ສ່ວນປະສົມໃນອາຫານ | 50 | ກຼາມ/ຄົນ |
| 5 | ຊ້ອນ (ໂຈກຕັກວັດຖຸດິບ) | ສຳລັບຊ້ອນປະສົມອາຫານ | 1 | ກ້ານ |
| 6 | ຊິງຊັ່ງ | ຂະໜາດ 15ກິໂລກຼາມ | 1 | ໜ່ວຍ |
| 7 | ຊາມໃຫຍ່ | ໃຊ້ເປັນບ່ອນປະສົມອາຫານ | 1 | ໃບ/ຈຸດປະສົມ |
| 8 | ຄຸ ຫຼື ຊາມນ້ອຍ | ໃສ່ວັດຖຸດິບຕອນຊັ່ງນ້ຳໜັກ | 1 | ໜ່ວຍ/ຈຸດ |
| **ສື່ການຮຽນ-ການສອນ** | | | | |
| 1 | ພາວເວີພ້ອຍ | ການຮຽນ-ການສອນ | 1 | ບົດ |
| 2 | | ລົງເບິ່ງພາກປະຕິບັດ | 1 | ຈຸດ |

### ❖ ອາຫານ

ຄວາມຮູ້ເບື້ອງຕົ້ນກ່ຽວກັບຫຼັກການຂອງອາຫານໃນການລ້ຽງໄກ່ລາດ ເຊິ່ງເນື້ອໃນທີ່ທ່ານຈະໄດ້ຮຽນປະກອບມີຄວາມຕ້ອງການອາຫານຂອງໄກ່ຢູ່ໃນແຕ່ລະຊ່ວງອາຍຸ, ວັດຖຸດິບທີ່ໃຊ້ໃນການລ້ຽງໄກ່ ແລະ ການສ້າງສູດອາຫານ

### 4.1 ຄວາມຕ້ອງການອາຫານ

ໄກ່ແຕ່ລະຊ່ວງອາຍຸມີຄວາມຕ້ອງການອາຫານເພື່ອການຈະເລີນເຕີບໂຕໃນປະລິມານທີ່ແຕກຕ່າງກັນທັງທາງດ້ານປະລິມານ ແລະ ຄຸນຄາທາງດ້ານອາຫານ. ຈະເປັນອາຫານທີ່ປະສົມເອົາເອງ ຫຼື ເປັນອາຫານສຳເລັດຮູບຈາກໂຮງງານກໍໄດ້. ຊະນິດອາຫານ, ປະລິມານອາຫານຈະເໝາະສົມສຳລັບໄກ່ຫຼືບໍ່ ປະເມີນໄດ້ໂດຍການຈັບເບິ່ງໂຕໄກ່ວ່າຄວາມຕຸ້ຍຂອງ, ແມ່ໄກ່ໃຫ້ໄຂ່ປົກກະຕິບໍ່. ຖ້າໄກ່ຈ່ອຍ, ໄຂ່ບໍ່ປົກກະຕິ, ຖ່າຍແຫຼວ ອາຫານທີ່ໃຊ້ບໍ່ຄ່ອຍເໝາະສົມກັບອາຍຸຂອງໄກ່ທີ່ກິນອາຫານຊະນິດດັ່ງກ່າວ.

- ໄກ່ນ້ອຍອາຍຸ 1 ວັນ ຫາອາຍຸ 2 ເດືອນ ຕ້ອງການອາຫານທີ່ມີທາດຊີ້ນສູງກວ່າ 20%,
- ໄກ່ອາຍຸ 2 ເດືອນ ຫາ 4,5 ເດືອນ ຕ້ອງການທາດຊີ້ນ 16%
- ໄກ່ອາຍຸຫຼາຍກວ່າ 4,5 ເດືອນ ຕ້ອງການທາດຊີ້ນ 13-14%

- ໄກ່ໃຫຍ່ທີ່ລ້ຽງປ່ອຍ ຕ້ອງການທາດຊີ້ນ 11-12%
- ອາຫານສຳເລັດຮູບສຳລັບໄກ່ນ້ອຍທີ່ຂາຍກັນທົ່ວໄປ ຈະມີທາດຊີ້ນຫຼາຍກວ່າ 21%, ໄຂມັນຫຼາຍກວ່າ 4%, ເຍື່ອໄຍໜ້ອຍກວ່າ 5% ແລະ ຄວາມຊຸ່ມໜ້ອຍກວ່າ 13%

ປະລິມານອາຫານທີ່ໄກ່ສາມາດກິນໄດ້

| ອາຍຸໄກ່(ອາທິດ) | ອາຫານທີ່ໃຫ້ (ກຼາມ/ໂຕ/ມື້) | ນ້ຳໜັກໄກ່ (ກຼາມ/ໂຕ) |
|---|---|---|
| 1 | 10 | 49 |
| 2 | 20 | 76 |
| 3 | 30 | 115 |
| 4 | 40 | 185 |
| 5 | 50 | 250 |
| 6 | 60 | 370 |

ຄ່າສະເລ່ຍຄວາມຕ້ອງການອາຫານ ແລະ ນ້ຳໃນແຕ່ລະໄລຍະ

| ອາຍຸໄກ່ | ປະລິມານອາຫານ (ກຼາມ/ໂຕ/ມື້) | ປະລິມານນ້ຳ (ມິນລີລິດ/ໂຕ/ມື້) |
|---|---|---|
| 2ອາທິດ | 20 | 40 |
| 1 ເດືອນ | 40 | 80 |
| 2 ເດືອນ | 70 | 120 |
| 3 ເດືອນ | 100 | 150 |
| ຫຼາຍກວ່າ 3 ເດືອນ | 130 | 200 |

**4.2 ວັດຖຸດິບອາຫານສັດ**

ວັດຖຸດິບ ທີ່ນຳມາໃຊ້ເປັນອາຫານສັດຈະມີຄຸນຄ່າທາງດ້ານອາຫານສັດແຕກຕ່າງກັນ ຂຶ້ນກັບຊະນິດຂອງວັດຖຸດິບ, ອາຍຸ, ແຫຼ່ງທີ່ປູກ

ອາຫານທີ່ນຳໃຊ້ລ້ຽງໄກ່ຕ້ອງມີວັດຖຸດິບທີ່ເປັນແຫຼ່ງພະລັງງານ ຫຼື ທາດແປ້ງເຊັ່ນ: ຮຳ, ເຂົ້າປຽນ, ສາລີ, ມັນຕົ້ນ, ແກ່ນຖົ່ວຊະນິດຕ່າງໆ, ແກ່ນຫຍ້າ, ພືດຜັກສີຂຽວ ແຕ່ບໍ່ຄວນເກືອແຕ່ຮຳຢ່າງດຽວ






ຮຳ ສາລີ ມັນຕົ້ນ ເຂົ້າເປືອກ-ເຂົ້າສານ





ແກ່ນຖົ່ວ ແກ່ນຫຍ້າ ພືດຜັກສົດ

ຄວນມີແຫຼ່ງທາດຊີ້ນເຊັ່ນ ອາຫານສຳເລັດຮູບ, ໃບພືດແຫ້ງບົດ, ກາກນ້ຳເຕົ້າຮູ້ , ພວກສັດນ້ອຍປະເພດຕ່າງໆ, ແກ່ນພືດ ແລະ ອື່ນໆ ປະມານ 10% ຂອງນ້ຳໜັກອາຫານທັງໝົດ.







ອາຫານສຳເລັດຮູບ ປວກ ຂີ້ກະເດືອນ ແກ່ນຖົ່ວ





ໃບກະຖິນ ໃບມັນຕົ້ນ ໃບພືດແຫ້ງບົດ

ຖ້າລ້ຽງໄກ່ໃນປະລິມານໜ້ອຍໂຕ ຈະໃຊ້ຮຳປະສົມສາລີບົດ ແລະ ໃບກະຖິນແຫ້ງບົດ (ໃບມັນຕົ້ນແຫ້ງບົດ) ກໍພໍໃຊ້ໄດ້, ສ່ວນແຮ່ທາດນຳໃຊ້ເປືອກຫອຍ ຫຼື ເປືອກໄຂ່ບົດກໍພຽງພໍ. ຖ້າມີໄກ່ຫຼາຍຕ້ອງໃຫ້ອາຫານຫຼາຍຈຸດ ໃຫ້ໄກ່ໄດ້ກິນອາຫານພ້ອມກັນ

**4.3 ການປະສົມອາຫານ**

ຫຼັກການຂອງການສ້າງສູດອາຫານ ຫຼື ເຮັດອາຫານປະສົມຂຶ້ນເອງ ໂດຍການນໍາໃຊ້ວັດຖຸດິບທີ່ຫາໄດ້ງ່າຍພາຍໃນທ້ອງຖິ່ນມານໍາໃຊ້ເປັນອາຫານສັດລ້ຽງ ໂດຍການວາງຫຼືກໍານົດປະລິມານທີ່ຈະໃຊ້ຂອງວັດຖຸດິບຊະນິດນັ້ນໆ ມາຄູນດ້ວຍທາດຊີ້ນຂອງວັດຖຸດິບຊະນິດດັ່ງກ່າວ ຈາກນັ້ນແມ່ນຫານດ້ວຍ 100. ການປະສົມອາຫານບໍ່ວ່າຈະມີວັດຖຸດິບໜ້ອຍຫຼືຫຼາຍຊະນິດ ທຸກຄັ້ງການວາງປະລິມານວັດຖຸດິບ ເວລາລວມກັນທຸກຢ່າງແລ້ວຕ້ອງເທົ່າກັບ 100

ຕົວຢ່າງ:ປະສົມອາຫານຂຶ້ນເອງ ໂດຍນໍາໃຊ້ອາຫານສໍາເລັດຮູບ 40% ກັບຮໍາ 30% ແລະ ສາລີບົດ 30% ກໍຈະໄດ້ທາດຊີ້ນເທົ່າກັບ 13,40% ສາມາດນໍາໃຊ້ລ້ຽງໄກ່ລຸ້ນ ແລະ ໄກ່ພໍ່ແມ່ພັນ

| ວັດຖຸດິບ | ປະລິມານທີ່ໃຊ້ (ກິໂລກຼາມ) | ທາດຊີ້ນໃນວັດຖຸດິບ(%) | ທາດຊີ້ນໃນສູດອາຫານ(%) |
|---|---|---|---|
| ສາລີ(ເຂົ້າປຽນ) | 30 | 8 | 2,40 |
| ຮໍາອ່ອນ | 30 | 10 | 3,00 |
| ອາຫານສໍາເລັດຮູບ | 40 | 20 | 8,00 |
| ລວມ | 100 | | 13,40 |

ສູດປະສົມອາຫານທີ່ໃຊ້ໄດ້ທັງໄກ່ນ້ອຍ ແລະ ໄກ່ໃຫຍ່

| ວັດຖຸດິບ | ປະລິມານທີ່ໃຊ້ (ກິໂລກຼາມ) | ທາດຊີ້ນໃນວັດຖຸດິບ(%) | ທາດຊີ້ນໃນສູດອາຫານ(%) |
|---|---|---|---|
| ສາລີ(ເຂົ້າປຽນ) | 25 | 0.08 | 2.00 |
| ຮໍາອ່ອນ | 25 | 0.10 | 2.50 |
| ຫົວມັນຕົ້ນບົດ | 20 | 0.025 | 0.50 |
| ກາກຖົ່ວເຫຼືອງ | 10 | 0.40 | 4.00 |
| ປາປົ່ນ | 3 | 0.50 | 1.50 |
| ໃບກະຖິນແຫ້ງ | 9 | 0.17 | 1.53 |
| ກະດູກບົດ | 7.70 | | |
| ເກືອ | 0.30 | | |
| ລວມ | 100 | | 12,03 |

ຕົວຢ່າງ: ໄກ່ຝູງໜຶ່ງ ມີໄກ່ຜູ້ 2ໂຕ, ມີໄກ່ແມ່ 10ໂຕ, ມີໄກ່ບ່າວໄກ່ສາວ 20 ໂຕ ໂດຍນໍາໃຊ້ຂໍ້ມູນຕາຕະລາງຄວາມຕ້ອງການອາຫານຂອງໄກ່ ຜູ້ລ້ຽງສາມາດຄິດໄລ່ປະລິມານອາຫານທີ່ໄກ່ຕ້ອງການກິນໃນແຕ່ລະມື້ ຫຼື ຊ່ວງໄລຍະການລ້ຽງ 1 ເດືອນດັ່ງນີ້:

ວິທີຄິດໄລ່:
ອາຫານທີ່ໄກ່ພໍ່-ແມ່ພັນຕ້ອງການ

ອາຫານທີ່ຕ້ອງການຕໍ່ມື້ = ຈຳນວນໄກ່ x ອາຫານທີ່ກິນຕໍ່ມື້
= 12 ໂຕ x 130 ກຼາມ = 1.56 ກິໂລກຼາມ

ຕ້ອງການຕໍ່ເດືອນ = ອາຫານທີ່ຕ້ອງການຕໍ່ມື້ x ຈຳນວນມື້ທີ່ລ້ຽງ
= 1.56 ກິໂລກຼາມ x 30 ມື້ = 46.8 ກິໂລກຼາມ

ອາຫານທີ່ໄກ່ບ່າວໄກ່ສາວຕ້ອງການ

ອາຫານທີ່ຕ້ອງການຕໍ່ມື້ = ຈຳນວນໄກ່ x ອາຫານທີ່ຕ້ອງການຕໍ່ມື້
= 20 ໂຕ x 100 ກຼາມ = 2 ກິໂລກຼາມ

ຕ້ອງການຕໍ່ເດືອນ = ອາຫານທີ່ຕ້ອງການຕໍ່ມື້ x ຈຳນວນມື້ທີ່ລ້ຽງ
= 2 ກິໂລກຼາມ x 30 ມື້ = 60 ກິໂລກຼາມ

ເມື່ອຮູ້ຈຳນວນທີ່ຕ້ອງການແລ້ວກໍ່ສາມາດຈັດຊື້ວັດຖຸດິບທີ່ຈະມານຳໃຊ້ລ້ຽງໄກ່ຝູງສັດດັ່ງກ່າວໄດ້ວ່າຈະຊື້ຮຳ, ຊື້ເຂົ້າປຽນ (ສາລີບົດ) ຫຼື ອາຫານສຳເລັດຮູບໜ້ອຍຫຼາຍປານໃດເພື່ອຈະໄດ້ມີອາຫານລ້ຽງໄກ່ໃຫ້ກຸ່ມ 1 ເດືອນ. ຄຸນນະພາບຂອງອາຫານຈະສູງພຽງພໍສຳລັບໄກ່ຫຼືບໍ່ ແລະ ປະລິມານຈະໜ້ອຍຫຼືຫຼາຍຕາມຄວາມຕ້ອງການຂອງໄກ່ຫຼືບໍ່ ແມ່ນປະເມີນໄດ້ຈາກໂຕໄກ່ ຖ້າໄກ່ຕຸ້ຍຂົນເຫຼື້ອມເປັນເງົາສະແດງວ່າອາຫານທີ່ນຳໃຊ້ແມ່ນມີຄວາມເໝາະສົມທັງຄຸນນະພາບ ແລະ ປະລິມານທີ່ໃຫ້ສຳລັບໄກ່ທີ່ລ້ຽງ ແຕ່ຖ້າໄກ່ຍັງຈ່ອຍ ແລະ ຂົນບໍ່ລຽບສະແດງວ່າຄຸນນະພາບອາຫານອາດຈະບໍ່ດີພໍ ຫຼື ປະລິມານອາຫານທີ່ໃຫ້ອາດຈະໜ້ອຍເກີນໄປ. ທັງໝົດນີ້ຕ້ອງການປະສົບການ ແລະ ຄວາມຊຳນານ.

| ອົງປະກອບການຮຽນ | ໜ້າ: 07 |
|---|---|
| ຊື່ອົງປະກອບທີ 5: ການລ້ຽງໄກ່ແຕ່ລະໄລຍະ | |
| ຊື່ໂມດູນ: ການລ້ຽງໄກ່ລາດ | ລະຫັດ: |
| ຊື່ອາຊີບ: ລ້ຽງສັດ | |

## ❖ ຈຸດປະສົງ

ເພື່ອໃຫ້ຜູ້ຮຽນມີຄວາມຮູ້ຄວາມເຂົ້າໃຈ ແລະ ສາມາດອະທິບາຍກ່ຽວກັບການລ້ຽງໄກ່ລາດ ໃນແຕ່ລະຊ່ວງອາຍຸ ແລະ ສາມາດປະຕິບັດເອງໄດ້ ໃນການຈັດການລ້ຽງໄກ່ໄລຍະຕ່າງໆໂດຍສະເພາະການລ້ຽງໄກ່ນ້ອຍ, ໄກ່ລຸ້ນສາວ ແລະ ໄກ່ພໍ່ແມ່ພັນ

.

## ❖ ວັດສະດຸອຸປະກອນ ແລະ ສື່:

| ລຳດັບ | ລາຍການ | ຄຳອະທິບາຍ | ຈຳນວນ | ຫົວໜ່ວຍ |
|---|---|---|---|---|
| **ອຸປະກອນ ແລະ ເຄື່ອງມື (ໄລຍະໄກ່ນ້ອຍ)** | | | | |
| 1 | ລະບົບໄຟຟ້າຄົບຊຸດ | ໃຫ້ແສງສະຫວ່າງ | 1 | |
| 2 | ຊຸດດອກໄຟປ້ອມ | ຂະໜາດ 100ວັດ | 1 | ຊຸດ |
| 3 | ຂອບກັ້ນ/ຂອບອົບ | ຂັງໄກ່ນ້ອຍ | 1 | ຊຸດ |
| 4 | ຕຸກໃສ່ນໍ້າ | ຂະໜາດ 1-3ລິດ | 1 | ຕຸກ |
| 5 | ຖາດອາຫານ | ໃສ່ອາຫານໄກ່ແຕກໃໝ່ | | ຖາດ |
| 6 | ຮາງອາຫານແບບຍາວ (ໄກ່ນ້ອຍ) | ໃສ່ອາຫານໄກ່ສອງອາທິດ | 1 | ຮາງ |
| 7 | ກົງໄກ່ນ້ອຍ | ຂະໜາດ 1x1-5ແມັດ | 1 | ກົງ |
| 8 | ຢາບຳລຸງ | ປະສົມນໍ້າໃຫ້ໄກ່ກິນ | 1 | ຊອງ |
| 9 | ຢາຕ້ານເຊື້ອ | ປະສົມນໍ້າໃຫ້ໄກ່ກິນ | 1 | ຊອງ |
| 10 | ຊິງຊັ່ງອາຫານ/ໄກ່ | ຂະໜາດ 15ກິໂລກຼາມ | 1 | ເຄື່ອງ |
| **ອຸປະກອນ ແລະ ເຄື່ອງມື (ໄກ່ລຸ້ນສາວແລະໄກ່ໃຫຍ່) ເພີ່ມຈາກໄກ່ນ້ອຍ** | | | | |
| 1 | ຮັງໄຂ່ | ຂະໜາດ 25x30ຊມ | 1 | ຮັງ |
| 2 | ວັດຖຸຮອງຮັງໄຂ່ (ເຟືອງແຫ້ງ) | ຮອງຮັງໄຂ່ | 1 | ເປົາ |
| 3 | ຕຸກໃສ່ນໍ້າ | ຂະໜາດ 3-5ລິດ | 1 | ຕຸກ |
| 4 | ຖັງອາຫານແບບແຂວນ (ໄກ່ໃຫຍ່) | ຂະໜາດ 3-5ກິໂລກຼາມ | 1 | ຕຸກ |
| 5 | ຄອກໄກ່ | ເພື່ອເປັນຕົວຢ່າງ | 1 | ຫຼັງ |
| 6 | ສຸ່ມຂັງໄກ່ | ຂັງແມ່ໄກ່ແລະລູກ | 1 | ອັນ |
| **ສື່ການຮຽນ-ການສອນ** | | | | |
| 1 | ພາວເວີພ້ອຍ | ການຮຽນ-ການສອນ | 1 | ບົດ |
| 2 | ພື້ນທີ່ລ້ຽງຕົວຈິງ | ລົງເບິ່ງພາກສະໜາມ | 2 | ຈຸດ |

❖ **ການລ້ຽງໄກ່ແຕ່ລະໄລຍະ**

ຄວາມຮູ້ເບື້ອງຕົ້ນກ່ຽວກັບຫຼັກການຂອງການລ້ຽງໄກ່ລາດແຕ່ລະໄລຍະ ເຊິ່ງເນື້ອໃນທີ່ທ່ານຈະໄດ້ຮຽນປະກອບດ້ວຍ  ການລ້ຽງໄກ່ຊ່ວງໄລຍະຍັງນ້ອຍ, ຊ່ວງເປັນໄກ່ລຸ້ນ ແລະ ການລ້ຽງພໍ່ແມ່ພັນໃນຊ່ວງການໃຫ້ໄຂ່ ຫຼື ຜະລິດລູກ

ຮູບແບບຂອງການລ້ຽງໄກ່ລາດບໍ່ວ່າຈະເປັນການລ້ຽງແບບຂັງ ຫຼື ລ້ຽງແບບປ່ອຍຕາມເດີ່ນບ້ານ ຕ່າງກໍມີຈຸດດີ ແລະ ຈຸດອ່ອນທີ່ແຕກຕ່າງກັນ ດັ່ງນັ້ນການທີ່ຜູ້ລ້ຽງຈະເລືອກລ້ຽງໃນຮູບແບບໃດ ແມ່ນອີງໃສ່ຄວາມສະດວກ, ອີງໃສ່ຈຳນວນໄກ່ ແລະ ຂຶ້ນກັບພື້ນທີ່ທີ່ຈະນຳໃຊ້ເຂົ້າໃນການລ້ຽງໄກ່ ຊຶ່ງໂດຍທົ່ວໄປແລ້ວການລ້ຽງໄກ່ລາດມັກຈະນິຍົມລ້ຽງ 3 ຮູບແບບຄື



ລັກສະນະການລ້ຽງແບບປ່ອຍ



ລັກສະນະການລ້ຽງແບບຂັງ



ລັກສະນະຂອງການລ້ຽງແບບເຄິ່ງຂັງເຄິ່ງປ່ອຍ

## 5.1 ການລ້ຽງໄກ່ຊ່ວງໄລຍະຍັງນ້ອຍ

ໃນການລ້ຽງໄກ່ລາດ ມັກຈະລ້ຽງກັນໃນປະລິມານໜ້ອຍ ຊຶ່ງມັກຈະປ່ອຍໃຫ້ແມ່ໄກ່ຟັກໄຂ່ເອງ ແລະ ລ້ຽງລູກເອງ ເມື່ອຟັກໄຂ່ໝົດແລ້ວກໍ່ຍ້າຍແມ່ໄກ່ ແລະ ໄກ່ນ້ອຍ ລົງຈາກຮັງໄຂ່ມາຂັງລວມກັນໄວ້ປະມານ 7-10 ມື້, ມີການໃຫ້ນ້ຳ-ໃຫ້ອາຫານຈົນກວ່າລູກໄກ່ແຂງແຮງ ແລ້ວປ່ອຍອອກໄປຊອກຫາກິນນຳແມ່ ຄວນໃຫ້ອາຫານໄວ້ໃນຊຸ່ມໃຫ້ໄກ່ນ້ອຍເຂົ້າກິນເອງ. ບັນຫາທີ່ປ່ອຍໃຫ້ແມ່ໄກ່ລ້ຽງລູກເອງ ແຕ່ລູກໄກ່ຈະຫຼອດຕາຍພຽງເລັກໜ້ອຍເພາະ:

- ໄກ່ນ້ອຍໜາວ ແລະ ປຽກຊຸ່ມ ຍ້ອນແມ່ໄກ່ພາລູດອອກຫາກິນແຕ່ເຊົ້າມືດ,
- ປ່ອຍໄກ່ນ້ອຍຍາດຊີງກິນອາຫານນຳໄກ່ໃຫຍ່ ກິນອາຫານບໍ່ພຽງພໍ ອີກທັງຖືກໂຕໃຫຍ່ຈິກຕອດ
- ກິນອາຫານຄຸນນະພາບຕ່ຳ ແລະ ເປີເປື້ອນໄປດ້ວຍໄຂ່ກາຝາກ
- ໄກ່ນ້ອຍຂາດຄວາມອົບອຸ່ນເຮັດໃຫ້ຕິດເຊື້ອພະຍາດງ່າຍ
- ເຮັດໃຫ້ເຮັດໃຫ້ໄກ່ນ້ອຍນານໃຫຍ່ ໄກ່ນ້ອຍຄອດ
- ແມ່ໄກ່ໃຊ້ເວລາໃນການລ້ຽງລູກ 2-4 ເດືອນ ຈຶ່ງແຍກໂຕອອກຈາກລູກເພື່ອວາງໄຂ່ໃໝ່





ຂັງແມ່ໄກ່ໄວ້ນຳລູກ ປ່ອຍໄກ່ນ້ອຍອອກໄປຫາກິນແມ່ໄກ່

ຖ້າແຍກໄກ່ນ້ອຍອອກຈາກແມ່ໄກ່ມາລ້ຽງຕ່າງຫາກ ຈະຊ່ວຍໃຫ້ແມ່ໄກ່ໃຫ້ໄຂ່ໄດ້ 3-4 ຄັ້ງ/ປີ ຫຼື ໃຫ້ລູກປະມານ 30 ໂຕ/ແມ່/ປີ ການແຍກໄກ່ນ້ອຍຫຼັງຟັກແຕກອອກມາລ້ຽງຕ່າງຫາກ ຕ້ອງໄດ້ເອົາໃຈໃສ່ໃນເລື່ອງການໃຫ້ນ້ຳ ແລະ ການໃຫ້ອາຫານທີ່ມີຄຸນນະພາບໃຫ້ໄກ່ໄດ້ກິນຕະຫຼອດຈະຊ່ວຍໃຫ້ໄກ່ໃຫຍ່ໄວ

ໄກ່ນ້ອຍໃນຊ່ວງອາຍຸ 1,5 ເດືອນລົງມາມັກຈະມີບັນຫາເລື່ອງການຕາຍ ຍ້ອຍໄກ່ປຽກຊຸ່ມ, ໄກ່ຂາດສານອາຫານ, ສັດຕູທຳລາຍ ແລະ ຕິດເຊື້ອພະຍາດ. ດັ່ງນັ້ນໃນຊ່ວງນີ້ຜູ້ລ້ຽງຈະຕ້ອງໄດ້ເອົາໃຈໃສ່ດັ່ງນີ້:

**ການໃຫ້ຄວາມອົບອຸ່ນ**

ແຍກໄກ່ນ້ອຍອອກລ້ຽງຕ່າງຫາກຄວນໃຫ້ຄວາມອົບອຸ່ນດ້ວຍດອກໄຟ, ດອກໄຟປ້ອມຂະໜາດ 60-100 ວັດ ສາມາດໃຫ້ຄວາມອົບອຸ່ນໄກ່ນ້ອຍໄດ້ປະມານ 20-25 ໂຕ/ດອກ ຕະລອດໄລຍະອົບ 2-4 ອາທິດ (ຂຶ້ນກັບອາກາດໜາວ) ໂດຍສ້າງແນວກັ້ນບໍລິເວນໄວ້ບໍ່ໃຫ້ໄກ່ນ້ອຍອອກໄກຈາກດອກໄຟໄກເກີນໄປ. ຄວາມອົບອຸ່ນຈະເໝາະສົມຫຼືບໍ່ແມ່ນອີງຕາມພຶດຕິກຳຂອງໄກ່ນ້ອຍເປັນຫຼັກເຊັ່ນ:

- ໄກ່ນ້ອຍຮ້ອນ: ໄກ່ນ້ອຍບໍ່ຢູ່ກ້ອງດອກໄຟ, ອ້າປາກຍ່າງເລາະໄປມາ ກິນແຕ່ນ້ຳ
- ໄກ່ນ້ອຍໜາວ: ນອນຈຸ້ມກັນ ບາງໂຕຢືນຊຶງເຮັດປີກເຕື່ອຍ ສ່ວນຫຼາຍຈະຮ້ອງບໍ່ຢຸດ
- ຄວາມອົບອຸ່ນພໍດີ: ໄກ່ກະຈ່າຍກັນຢູ່, ໄກ່ບາງໂຕນອນ ບາງໂຕກິນອາຫນ, ກິນນ້ຳ ຍ່າງໄປມາ



ລັກສະນະຂອງການໃຫ້ຄວາມອົບອຸ່ນໄກ່ນ້ອຍທົດແທນແມ່ໄກ່

### ການໃຫ້ອາຫານໄລຍະໄກ່ຍັງນ້ອຍ

ອາຫານສຳລັບໄກ່ນ້ອຍຄວນມີຄຸນນະພາບດີສູງ ແລະ ມີຫຼາຍພໍ ໂດຍມີອາຫານໃຫ້ໄກ່ໄດ້ກິນຕະຫຼອດຕາມຕ້ອງການ ຈະຊ່ວຍໃຫ້ໄກ່ນ້ອຍສົມບູນແຂງແຮງ, ໃຫຍ່ໄວ. ຈະເປັນອາຫານທີ່ປະສົມຂຶ້ນມາເອງ ຫຼື ຈະເປັນອາຫານສຳເລັດຮູບຈາກໂຮງງານກໍໄດ້, ອາຫານທີ່ເໝາະສົມສຳລັບລ້ຽງໄກ່ນ້ອຍຕ້ອງມີທາດຊີ້ນຫຼາຍກວ່າ 20% ແລະ ອາຫານຄວນມີໃຫ້ໄກ່ນ້ອຍໄດ້ກິນຕະລອດເວລາ ສິ່ງສຳຄັນບໍ່ຄວນເກືອໄກ່ນ້ອຍດ້ວຍຮຳພຽງຢ່າງດຽວ ແລະ ບໍ່ຄວນເກືອໄກ່ນ້ອຍຮ່ວມກັບໄກ່ໃຫຍ່.



### ການໃຫ້ນ້ຳ

ນ້ຳຈະຊ່ວຍໃຫ້ອາຫານອ່ອນນຸ້ມລົງ, ໄກ່ຈະຍ່ອຍອາຫານໄດ້ໄວ ໂດຍປົກກະຕິໄກ່ຈະໄດ້ຮັບນ້ຳຈາກການກິນພືດສົດ, ກິນອາຫານທີ່ປຽກ ແລະ ໄດ້ຈາກການກິນນ້ຳໂດຍກົງ ໂດຍສະເພາະໃນການໃຫ້ອາຫານສຳເລັດຮູບນ້ຳຖືວ່າມີຄວາມຈຳເປັນ ແລະ ຂາດບໍ່ໄດ້, ຕຸກນ້ຳຂະໜາດບັນຈຸ 3-4 ລິດ ໃຊ້ສຳລັບໄກ່ນ້ອນ 20-25 ໂຕ. ຖ້າຊ່ວງໃດດິນຟ້າອາກາດມີການປ່ຽນແປງ ຫຼື ວ່າໄກ່ຄຽດຈາກການຈັບ, ຕົກໃຈແລະອື່ນໆ ຄວນປະສົມວິຕາມິນລົງໄປໃນນ້ຳໃຫ້ໄກ່ກິນໃນອັດຕາ ວິຕາມິນ 1 ຊີຊີຕໍ່ນ້ຳ 1 ລິດ.



ໃນການໃຫ້ວິດຕາມິນ ແລະ ປະເພດຢາຕ້ານເຊື້ອຈະຕ້ອງປະຕິບັດຕາມການແນະນຳທີ່ກຳນົດໄວ້ໃນຊອງ ຫຼື ກວດຢາຢ່າງເຄັ່ງຄັດ ເພາະຈະມີຜົນຕໍ່ການຈະເລີນເຕີບໂຕຂອງໄກ່ໄດ້.

## 5.2 ການລ້ຽງໄກ່ລຸ້ນສາວ

ການລ້ຽງໄກ່ລຸ້ນເປັນການລ້ຽງໄກ່ທີ່ມີອາຍຸແຕ່ 2 ເດືອນຂຶ້ນໄປ ໃນຊ່ວງນີ້ເຮົາສາມາດລ້ຽງລວມກັນທັງໄກ່ຜູ້ ແລະໄກ່ແມ່ກໍໄດ້. ສາມາດລ້ຽງໄດ້ໃນຮູບແບບລ້ຽງໃສ່ກົງ ຫຼື ລ້ຽງແບບປ່ອຍພື້ນໃຫ້ໃຊ້ພື້ນທີ່ 8 ໂຕ/ຕາແມັດ, ໄກ່ອາຍຸ 2 ເດືອນ ຫາ 4.5 ເດືອນ ຕ້ອງການອາຫານທີ່ມີທາດຊີ້ນຢ່າງໜ້ອຍ 16%, ໄກ່ອາຍຸຫຼາຍກວ່າ 4.5 ເດືອນ ຕ້ອງການທາດຊີ້ນ 13-14%

ການໃຫ້ອາຫານແມ່ນແບ່ງໃຫ້ 2 ຄັ້ງ/ມື້ ແລະ ຍັງໃຫ້ອາຫານແບບໃຫ້ໄກ່ກິນຕາມຄວາມສາມາດທີ່ໄກ່ກິນໄດ້ ເພື່ອເລັ່ງການຈະເລີນເຕີບໂຕ, ພື້ນທີ່ເຂົ້າກິນອາຫານຈະຕ້ອງກວ້າງແບບຮາງຍາວ 15-20 ຊັງຕີແມັດຕໍ່ໄກ່ 1 ໂຕ, ແບບຖັງແຂວນປະມານ 20-25 ໂຕ/ຖັງ.

ຖ້າລ້ຽງໄກ່ແບບປ່ອຍໃຫ້ອາຫານແຕ່ພຽງ 50-70% ຂອງຄວາມຕ້ອງການຂອງໄກ່ ຄວນແບ່ງອາຫານໃຫ້ຕອນເຊົ້າໜ້ອຍກວ່າໃຫ້ຕອນແລງ. ຈະເພີ່ມອາຫານຂຶ້ນ ຫຼື ລຸດປະລິມານອາຫານລົງໃຫ້ຈັບເບິ່ງໂຕໄກ່ ຖ້າໄກ່ຈ່ອຍຕ້ອງເພີ່ມອາຫານ ຫຼື ປ່ຽນສູດອາຫານ,

ໄກ່ 4-5 ໂຕ ລ້ຽງຕາມທົ່ງນາພາຍຫຼັງການເກັບກ່ຽວ ບໍ່ຈຳເປັນຕ້ອງໃຫ້ອາຫານເພີ່ມເຕີມກໍ່ໄດ້.

ໄກ່ 10-15 ໂຕ ລ້ຽງໃນເນື້ອທີ່ 3-4 ເຮັກຕາ ການໃຫ້ອາຫານເພີ່ມພຽງແຕ່ເອົາເຂົ້າເປືອກ ຫຼື ເຂົ້າປຽນ ຫວ່ານໃຫ້ໄກ່ກິນເລັກໜ້ອຍໃນຕອນແລງກ່ອນທີ່ໄກ່ຈະເຂົ້ານອນໃນລົກກໍພຽງພໍ.

ໄກ່ 50 ໂຕ ລ້ຽງໃນພື້ນທີ່ 1 ເຮັກຕາ ຕ້ອງໃຫ້ອາຫານເພີ່ມ 50% ຂອງປະລິມານອາຫານທີ່ໄກ່ຕ້ອງການໃນແຕ່ລະມື້.

ຄ່າສະເລ່ຍຄວາມຕ້ອງການອາຫານ ແລະ ນ້ຳໃນແຕ່ລະໄລຍະ

| ອາຍຸໄກ່ | ປະລິມານອາຫານ (ກຼາມ/ໂຕ/ມື້) | ປະລິມານນ້ຳ (ມິນລີລິດ/ໂຕ/ມື້) |
|---|---|---|
| 2ອາທິດ | 20 | 40 |
| 1 ເດືອນ | 40 | 80 |
| 2 ເດືອນ | 70 | 120 |
| 3 ເດືອນ | 100 | 150 |
| ຫຼາຍກວ່າ 3 ເດືອນ | 130 | 200 |






ສະພາບການລ້ຽງໄກ່ລຸ້ນແບບຂັງ ແລະ ແບບປ່ອຍ

## 5.3 ການລ້ຽງໄກ່ໃຫຍ່

ການລ້ຽງໄກ່ໃຫຍ່ ຫຼື ການລ້ຽງໄກ່ພໍ່ແມ່ພັນ ແມ່ນເພື່ອຈຸດປະສົງໃນການລ້ຽງເພື່ອຂະຫຍາຍພັນໃຫ້ໄກ່ໄຂ່ຫຼາຍຊຸດ ແຕ່ລະຊຸດໄດ້ລູກຫຼາຍໂຕ, ສິ່ງສຳຄັນແມ່ນເລື່ອງອາຫານ. ອາຫານທີ່ນຳໃຊ້ລ້ຽງໄກ່ໃຫຍ່ຄວນມີທາດຊີ້ນປະມານ 14%, ຖ້າລ້ຽງໄກ່ແບບປ່ອຍທີ່ມີພື້ນທີ່ກວ້າງຄວາມຕ້ອງການທາດຊີ້ນ 11-12% ກໍ່ພຽງພໍ ສ່ວນປະລິມານອາຫານທີ່ໃຫ້ແມ່ນ 130 ກຼາມ/ໂຕ/ມື້ ມີໄກ່ຫຼາຍຕ້ອງໃຫ້ອາຫານຫຼາຍຈຸດ ໃຫ້ໄກ່ໄດ້ກິນອາຫານພ້ອມກັນ, ຊະນິດອາຫານ, ປະລິມານອາຫານຈະເໝາະສົມສຳລັບໄກ່ຫຼືບໍ່ ປະເມີນໄດ້ໂດຍການຈັບເບິ່ງໂຕໄກ່ວ່າ ຄວາມຕຸ້ຍຂອງໜ້າເອິກ, ແມ່ໄກ່ໃຫ້ໄຂ່ປົກກະຕິບໍ່, ຖ້າໄກ່ຈ່ອຍ, ໄຂ່ບໍ່ປົກກະຕິ, ຖ່າຍແຫຼວ ສະແດງວ່າອາຫານທີ່ໃຊ້ບໍ່ເໝາະສົມ. ນອກຈາກອາຫານແລ້ວການລ້ຽງໄກ່ເພື່ອຜະລິດລູກຕ້ອງເບິ່ງອີກຫຼາຍດ້ານເຊັ່ນ:

- ສັດສ່ວນໂຕຜູ້ 1 ໂຕ ຄຸມຝູງໂຕແມ່ 5 ໂຕ ສູງສຸດໂຕແມ່ບໍ່ເກີນ 8 ໂຕ
- ໄກ່ລາດມັກໄປໄຂ່ໃສ່ຮັງດຽວກັນ ຕ້ອງກຽມຮັງໄຂ່ໄວ້ກ່ອນແມ່ໄກ່ຈະເລີ່ມໃຫ້ໄຂ່ 3 ແມ່ຕໍ່ຮັງ
- ຂະໜາດຂອງຮັງໄຂ່ 25x30 ຊັງຕີແມັດ ຫຼື ນຳໃຊ້ກະຕ່າ, ແກັດໄມ້ ຫຼື ຖັງໃສ່ນ້ຳ ແລະ ອື່ນໆ
- ຮັງໄຂ່ຕ້ອງໃສ່ວັດຖຸຮອງຮັງໄຂ່ທີ່ອ່ອນນຸ້ມ ແລະ ແຫ້ງ
- ຕົກແຕ່ງໃຫ້ໃຈກາງຂອງຮັງໄຂ່ເປັນຜົ້ງຄ້າຍຄືກົ້ນໝໍ້ຂາງ.
- ວາງຮັງໄຂ່ໃນບ່ອນທີ່ມີອາກາດລ່ວງດີ, ບໍ່ໃຫ້ຖືກຝົນ, ບໍ່ຖືກແດດ



ລັກສະນະທົ່ວໄປຂອງຮັງໄຂ່

ຖ້າຕ້ອງການໃຫ້ແມ່ໄກ່ໃຫ້ໄຂ່ຫຼາຍເທື່ອຕໍ່ປີ ໃຫ້ປະຕິບັດດັ່ງນີ້:

ມີແມ່ໄກ່ຫຼາຍໂຕ ບາງໂຕໄຂ່ໜ້ອຍ ບາງໂຕໄຂ່ຫຼາຍ, ໃຫ້ເກັບໄຂ່ອອກຈາກຮັງທຸກໆ 2 ມື້ ເພື່ອສະສົມໄວ້, ຫ້າມເກັບໄຂ່ອອກຈາກຮັງຈົນໝົດ (ປະໄຂ່ໄວ້ໃນຮັງ 2-3 ໜ່ວຍ), ເອົາໃສ່ແຕະໄຂ່ແລ້ວເກັບມ້ຽນໄຂ່ໄວ້ບ່ອນຮົ່ມ,

ອາກາດລ່ວງດີ, ເມື່ອແມ່ໄກ່ໂຕໃດເລີ່ມຟັກ ກໍເອົາໄຂ່ທີ່ເກັບໄວ້ນັ້ນໄປໃຫ້ແມ່ໄກ່ຟັກປະມານ 12-15 ໜ່ວຍ/ຮັງ ຂຶ້ນກັບຂະໜາດຂອງແມ່ໄກ່,

ໄຂ່ຈະຟັກແຕກພາຍຫຼັງທີ່ຟັກໄປໄດ້ 19-23 ມື້ (21 ມື້) ສ່ວນໄຂ່ທີ່ເຫຼືອແມ່ນໄຂ່ຢ້າງຮັງ.

ຫຼັງຟັກໄຂ່ແຕກໃຫ້ແຍກລູກໄກ່ອອກລ້ຽງຕ່າງຫາກ, ຫ້າມບໍ່ໃຫ້ເອົາໄຂ່ທີ່ຟັກບໍ່ແຕກໄປໃຫ້ໄກ່ແມ່ອື່ນທີ່ກຳລັງເລີ່ມຟັກ

ຊ່ວງລະດູຝົນບໍ່ແນະນຳໃຫ້ລ້ຽງໄກ່ນ້ອຍ ເພາະໂອກາດໄກ່ນ້ອຍຈະລອດຕາຍມີບໍ່ຫຼາຍ ເຖິງລອດຕາຍມາກໍ່ມີລັກສະນະນ້ອຍຄອດນານໃຫຍ່.



ການໄຂ່ ແລະ ການຟັກໄຂ່ຂອງແມ່ໄກ່

ປະສິດຕິພາບຂອງການຂະຫຍາຍພັນ ໄກ່ແມ່ປະມານ 5 ປີ ຫຼັງຈາກນັ້ນການຟັກແຕກຂອງໄຂ່ຈະບໍ່ສູງ ແລະ ລູກໄກ່ທີ່ເກີດມາຈະໃຫຍ່ບໍ່ສະເໝີກັນ ແລະ ຕິດເຊື້ອພະຍາດໄດ້ງ່າຍ. ສ່ວນໄກ່ໂຕຜູ້ຄວນຄັດອອກທຸກໆ 3 ປີ ຖ້າຈື່ງໄວ້ຈະເປັນການປະສົມພັນສາຍເລືອດດຽວກັນ ລູກໄກ່ທີ່ເກີດມາຈະມີໂຕນ້ອຍໂຕໃຫຍ່ ໄກ່ນ້ອຍມີຄວາມອ່ອນແອຫຼາຍ ບາງໂຕກໍພິການ ສ່ວນຫຼາຍແມ່ນລ້ຽງນານໃຫຍ່.

| ອົງປະກອບການຮຽນ | | ໜ້າ: 04 |
|---|---|---|
| ຊື່ອົງປະກອບທີ 6: ການຮັກສາສຸຂະພາບສັດ | | |
| ຊື່ໂມດູນ: ການລ້ຽງໄກ່ລາດ | ລະຫັດ: | |
| ຊື່ອາຊີບ: ລ້ຽງສັດ | | |

## ❖ ຈຸດປະສົງ

ເພື່ອໃຫ້ຜູ້ຮຽນມີຄວາມເຂົ້າໃຈ ສາມາດອະນາໄມ ແລະ ຂ້າເຊື້ອຄອກຂ້າເຊື້ອອຸປະກອນການລ້ຽງໄກ່ໄດ້ຖືກຕ້ອງຕາມຫຼັກການສາມາດຈັດຕັ້ງປະຕິບັດການນຳໃຊ້ຢາຊະນິດຕ່າງໆໃຫ້ໄກ່ກິນ ພ້ອມທັງຮູ້ນຳໃຊ້ວັກຊີນໃນການສ້າງພູມຄຸ້ມກັນໃຫ້ກັບໄກ່ດ້ວຍຕົນເອງ.

### ❖ ວັດສະດຸອຸປະກອນ ແລະ ສື່:

| ລຳດັບ | ລາຍການ | ຄຳອະທິບາຍ | ຈຳນວນ | ຫົວໜ່ວຍ |
|---|---|---|---|---|
| **ອຸປະກອນ ແລະ ເຄື່ອງມື (ຄົງທີ່)** | | | | |
| 1 | ສະແຫຼັງ | ຂະໜາດ 10ຊີຊີ | 3 | ອັນ |
| 2 | ເຂັມດູດນ້ຳຢາ | ເບີ 24 | 3 | ອັນ |
| 3 | ເຂັມສັກວັກຊີນ (ກ້າມຊີ້ນ ແລະຫຼືບໜັງ | ເບິ່ງຫຼືໃຫ້ວັກຊີນໄກ່ | 3 | ອັນ/ຊະນິດ |
| 4 | ເຂັມຢອດວັກຊີນ(ຕາ-ດັງ) | ເບິ່ງຫຼືໃຫ້ວັກຊີນໄກ່ | 3 | ອັນ |
| 5 | ເຂັມແທງໝາກສຸກສັດປີກ | ເບິ່ງຫຼືໃຫ້ວັກຊີນໄກ່ | 3 | ອັນ |
| 6 | ວັກຊີນ(ນິວຄາເຊີນອ່ອນ-ແກ່,ອະຫິວາສັດປີກ, ໝາກສຸກສັດປີກ, ຫຼອດລົມອັກເສບ | ເບິ່ງຫຼືປະຕິບັດຈິງ | 1 | ຊຸດ/ຊະນິດ |
| 7 | ວິດຕາມິນ | ປະສົມໃສ່ນ້ຳໃຫ້ໄກ່ກິນ | 1 | ຊອງ |
| 8 | ຢາຕ້ານເຊື້ອ | ປະສົມໃສ່ນ້ຳໃຫ້ໄກ່ກິນ | 1 | ຊອງ |
| 9 | ນ້ຳຢາລ້າງຈານ | ຂ້າເຊື້ອອຸປະກອນການລ້ຽງ | 1 | ຊຸດ |
| 10 | ປູນຂາວ | ຂ້າເຊື້ອຄອກ | 2 | ຖົງ |
| 11 | ຟອຍກວດພື້ນ | ກວດພື້ນຄອກ | 2 | ກ້ານ |
| 12 | ຟອຍກວດໄຍແມງມຸງ | ກວດຝາຄອກ | 2 | ກ້ານ |
| 13 | ພ້າ | ຕັດຫຍ້າ-ຕົ້ນໄມ້ພຸ່ມ | 2 | ດວງ |
| 14 | ໄກ່ (1ໂຕ/ຊະນິດວັກຊີນ/3 ຄົນ) | ໃຫ້ວັກຊີນ | | ໂຕ |
| **ສື່ການຮຽນ-ການສອນ** | | | | |
| 1 | ພາວເວີພ້ອຍ | ການຮຽນ-ການສອນ | 1 | ບົດ |
| 2 | ພື້ນທີ່ລ້ຽງຕົວຈິງ | ລົງປະຕິບັດພາກສະໜາມ | 2 | ຈຸດ |

### ❖ ການຮັກສາສຸຂະພາບສັດ

ຄວາມຮູ້ເບື້ອງຕົ້ນກ່ຽວກັບຫຼັກການຂອງການຮັກສາສຸຂະພາບສັດ ເຊິ່ງເນື້ອໃນທີ່ທ່ານຈະໄດ້ຮຽນປະກອບດ້ວຍ: ການອະນາໄມພື້ນທີ່ ແລະ ອຸປະກອນການລ້ຽງ, ການປ້ອງກັນ ແລະປິ່ນປົວສັດເຈັບ ແລະ ການນຳໃຊ້ວັກຊີນໃນການສ້າງພູມຄຸ້ມກັນໃຫ້ກັບສັດ.

## 6.1 ການອະນາໄມ

ການຮັກສາສຸຂະພາບສັດໃຫ້ແຂງແຮງຢູ່ຕະຫຼອດ ຈະຊ່ວຍໃຫ້ສັດສ້າງພູມຄຸ້ມກັນສາມາດ ຕໍ່ສູ້ກັບພະຍາດໄດ້ເປັນຢ່າງດີ. ການຮັກສາສຸຂະພາບສັດແມ່ນເລີ່ມຈາກ ການອະນາໄມບໍລິເວນພື້ນທີ່ລ້ຽງໄກ່ຕ້ອງສະອາດ, ອຸປະກອນການໃຫ້ນໍ້າ, ໃຫ້ອາຫານກໍຕ້ອງອະນາໄມທຸກຄັ້ງກ່ອນຈະນໍາໃຊ້ແຕ່ລະມື້, ສ່ວນການອະນາໄມຄອກໄກ່ ເດືອນລະເທື່ອ ແລະ ບໍລິເວນເດີ່ນອ້ອມຄອກໄກ່ປົກກະຕິ ຢ່າງໜ້ອຍອາທິດລະເທື່ອ. ນອກຈາກນັ້ນ ການສ້າງຄອກ ຄວນຄໍານຶງເຖິງໃຫ້ອາກາດສາມາດຖ່າຍເທໄດ້ສະດວກແລະ ບໍ່ຄວນໃຫ້ຄອກປຽກຊຸ່ມ. ຢາກໃຫ້ສຸຂະພາບສັດແຂງແຮງຄວນໃຫ້ອາຫານທີ່ມີຄຸນນະພາບ ແລະ ໃຫ້ອາຫານໄກ່ໃນປະລິມານພຽງພໍຕາມຄວາມຕ້ອງການຂອງໄກ່, ສິ່ງສໍາຄັນຄວນຖ່າຍພະຍາດໃຫ້ກັບສັດຢ່າງໜ້ອຍ 2 ຄັ້ງ/ປີ.

## 6.2 ການປ້ອງກັນ

ກໍາຈັດແຫຼ່ງນໍ້າເປື້ອນໃນບໍລິເວນອ້ອມຄອກໄກ່, ໃຫ້ໄກ່ໄດ້ກິນນໍ້າທີ່ສະອາດ, ກໍລະນີອາກາດມີການປ່ຽນແປງກະທັນຫັນ ຫຼື ມີສັດເຈັບຕ້ອງໄດ້ປະສົມວິຕາມິນຫຼືຢາຕ້ານເຊື້ອໃສ່ນໍ້າໃຫ້ໄກ່ກິນຕາມການແນະນໍາທີ່ລະບຸໄວ້ຕາມຊອງຢາ

ບໍ່ຄວນລ້ຽງສັດໜາແໜ້ນຈົນເກີນໄປ ເພາະຈະເຮັດໃຫ້ສັດຄຽດ, ເກີດການຍາດຊີງອາຫານ, ເກີດການຈິກຕອດກັນ ເຮັດໃຫ້ການຈະເລີນເຕີບໂຕຂອງສັດບໍ່ສະໝໍ່າສະເໝີກັນ

ບໍ່ຄວນລ້ຽງສັດຫຼາຍຊະນິດຮ່ວມກັນ ຫຼື ສັດທີ່ມີອາຍຸແຕກຕ່າງກັນຫຼາຍພາຍໃນຄອກດຽວກັນ ເພາະສັດແຕ່ລະຊະນິດ ແຕ່ລະຊ່ວງອາຍຸ ຈະມີພູມຄຸ້ມກັນພະຍາດຕ່າງກັນ ຊຶ່ງອາດເປັນໂຕແຜ່ເຊື້ອໄປຍັງສັດທີ່ມີພູມຄຸ້ມກັນຕໍ່າໄດ້

ບໍ່ຄວນໃຫ້ຄົນນອກ ຫຼື ສັດຊະນິດອື່ນເຂົ້າໄປໃນບໍລິເວນລ້ຽງສັດ ເພາະອາດເປັນການນໍາເຊື້ອພະຍາດເຂົ້າໄປຕິດຕໍ່ໃສ່ຝູງສັດ




ປະເພດວິຕາມິນ




ປະເພດຢາຕ້ານເຊື້ອ

ການນໍາໃຊ້ຢາຕ້ານເຊື້ອປະສົມໃສ່ນໍ້າໃຫ້ໄກ່ກິນຕ້ອງປະຕິບັດຕາມຂໍ້ແນະນໍາທີ່ຂຽນໄວ້ຂ້າງຊອງຢາ ຊຶ່ງແຕ່ລະຊະນິດຢາ ແຕ່ລະບໍລິສັດທີ່ຜະລິດຈະໄດ້ຂຽນກໍານົດໄວ້ຢ່າງຊັດເຈນ

## 6.3 ການສ້າງພູມຄຸ້ມກັນ

ບັນຫາປະຊາຊົນບໍ່ມັກລ້ຽງໄກ່ລາດຈຳນວນຫຼາຍເພື່ອເປັນສິນຄ້າ ຍ້ອນມີການລະບາດຂອງພະຍາດເກີດຂຶ້ນທຸກປີ ແຕ່ລະເທື່ອເຮັດໃຫ້ໄກ່ຕາຍໝົດແລ້ວສູນເສຍກຳລັງໃຈ.

ແກ້ໄຂໄດ້ໂດຍຜູ້ລ້ຽງໄກ່ມີຄວາມສົນໃຈ ຊອກຮູ້ເລື່ອງພະຍາດແລ້ວຫາວິທີປ້ອງກັນ ວິທີທີ່ດີສຳລັບການປ້ອງກັນແມ່ນການສ້າງພູມຄຸ້ມກັນໃຫ້ກັບໄກ່ ໂດຍການສັກວັກຊີນ. ແຕ່ການໃຊ້ວັກຊີນກໍ່ຄວນລະວັງ

ການສັກວັກຊີນໃຫ້ໄກ່ ຕ້ອງໃຊ້ກັບໄກ່ທີ່ມີສຸຂະພາບແຂງແຮງ ແລະ ບໍ່ຕິດເຊື້ອພະຍາດ

ວັກຊີນຊະນິດທີ່ລະລາຍນ້ຳກ່ອນໃຊ້ ເມື່ອປະສົມແລ້ວຕ້ອງໃຊ້ໃຫ້ໝົດພາຍໃນ 2 ຊົ່ວໂມງ(ໃນຊ່ວງທີ່ນຳໃຊ້ຕ້ອງເກັບໄວ້ໃນຕິກນ້ຳກ້ອນ)

ຕ້ອງໃຫ້ວັກຊີນອີກທຸກຄັ້ງກ່ອນມື້ໝົດອາຍຸໄລຍະຄຸ້ມກັນຂອງວັກຊີນແຕ່ລະຊະນິດ

ວັນຊີນທີ່ເຫຼືອຈາກການນຳໃຊ້(ໃຊ້ບໍ່ໝົດ) ຕ້ອງທຳລາຍຖິ້ມ

ອຸປະກອນທີ່ນຳໃຊ້ເຂົ້າໃນການສັກວັກຊີນໃຊ້ແລ້ວທຸກຄັ້ງຕ້ອງໄດ້ຂ້າເຊື້ອໂດຍການຕົ້ມກ່ອນເກັບໄວ້ ຫຼື ທຳລາຍ.

ການນຳໃຊ້ວັກຊີນໃຫ້ມີປະສິດຕິພາບຈະຕ້ອງໄດ້ປະຕິບັດກັບສັດທຸກໂຕພາຍໃນພື້ນທີ່ນັ້ນໆ.

ບໍ່ຄວາມສ້າງຄວາມຫວັງຈາກການສັກວັກຊີນປ້ອງກັນພຽງຢ່າງດຽວ ແຕ່ການຈັດການດ້ານຕ່າງໆ ແລະ ການຮັກສາສຸຂະພາບສັດທີ່ດີ ຈະຊ່ວຍປ້ອງກັນການເກີດພະຍາດໃນຝູງສັດໄດ້ດີທີ່ສຸດ.

ວັກຊີນຊະນິດໜຶ່ງສາມາດປ້ອງກັນໄດ້ແຕ່ພະຍາດດຽວ

ຈັດການແຍກໄກ່ເຈັບ, ໄກ່ຕາຍໂດຍບໍ່ຮູ້ສາເຫດຕ້ອງເຜົາ ຫຼື ຝັງ ຫ້າມຖິ້ມສະຊາຍ ຫຼື ຖິ້ມລົງນ້ຳ

ຫ້າມກິນ, ຫ້າມຂາຍ ແລະ ຫ້າມເຄື່ອນຍ້າຍສັດ ເມື່ອພະຍາດກຳລັງລະບາດ

ຕາຕະລາງການນຳໃຊ້ວັກຊີນໃນສັດປີກ

| ວັກຊີນ | ສັດ | ອາຍຸສັດ | ວິທີການໃຊ້ | ຄຸ້ມກັນໄດ້ | ເກັບຮັກສາ |
|---|---|---|---|---|---|
| ອະຫິວາສັດປີກ | ສັດປີກ | 4ອາທິດຂຶ້ນໄປ | 1cc, ສັກຫຼືບໜັງ | 3ເດືອນ | 4°C |
| ອະຫິວາເປັດ | ເປັດ | 3ອາທິດຂຶ້ນໄປ | 1cc, ສັກກ້າມຊີ້ນ | 6ເດືອນ | 4°C |
| ລອດລົມອັກເສບຕິດຕໍ່ | ໄກ່ | 2-4ອາທິດ | ຢອດຕາ, ດັງ 2-4 ຢອດ | 6ເດືອນ | 4°C |
| ໝາກສຸກສັດປີກ | ສັດປີກ | 2ອາທິດ ຂຶ້ນໄປ | ແທງໃສ່ປີກ 2-3 ເທື່ອ | 1 ປີ | -30ຮອດ4°C |
| ນິວຄາເຊີນອ່ອນ | ໄກ່ນ້ອຍ | 1-7ວັນ | ຢອດຕາ, ດັງ 2-4 ຢອດ | 2ເດືອນ | -30ຮອດ4°C |
| ນິວຄາເຊີນແກ່ | ໄກ່ໃຫຍ່ | 6ອາທິດຂຶ້ນໄປ | 0.5cc, ສັກກ້າມຊີ້ນ | 1 ປີ | -30ຮອດ4°C |
| ນິວຄາເຊີນຊະນິດທົນຮ້ອນ | ໄກ່ | 1ມື້ ຂຶ້ນໄປ | ຢອດຕາ, ດັງ 2-4 ຢອດ | 3ເດືອນ | 4°C |

ໝາຍເຫດ: ໝາກສຸກສັດປີກ ແລະ ຫຼອດລົມອັກເສບ ສັກພ້ອມກັນໄດ້

ຫ້າມບໍ່ໃຫ້ສັກວັກຊີນທັງ 2ຊະນິດໃຫ້ກັບໄກ່ທີ່ກຳລັງໄຂ່ ແລະ ຟັກ.

ນິວຄາເຊີນອາຍຸແກ່ ແລະ ອາຫິວາສັດປີກ ສັກພ້ອມກັນໄດ້

ໂດຍທົ່ວໄປວັກຊິນມີໄລຍະຄຸ້ມກັນໄດ້ 3ເດືອນ

-ອຸປະກອນທີ່ນຳໃຊ້ເຂົ້າໃນການສັກວັກຊິ້ນ ຊະນິດທີ່ນຳໃຊ້ໄດ້ຫຼາຍເທື່ອເຊັ່ນ: ສະແຫຼ້ງແລະ ເຂັມບາງຊະນິດແມ່ນໃຫ້ນຳໄປຕົ້ມ ຕາກແດດໃຫ້ແຫ້ງກ່ອນເກັບຮັກສາໄວ້ໃຊ້ຄັ້ງຕໍ່ໄປ. ແຕ່ບາງຊະນິດຫຼັງການນຳໃຊ້ຕ້ອງເກັບມ້ຽນໃຫ້ປອດໄພກ່ອນນຳໄປທຳລາຍ ຫຼື ເຜົາເຊັ່ນ: ກວດແກ້ວຂອງວັກຊິ້ນ, ເຂັ້ມ, ສະແຫຼ້ງ ແລະ ອື່ນໆ.




ການສັກວັກຊິນ ນິວຄາເຊີນ ການຢອດວັກຊິນ ນິວຄາເຊີນ




ການສັກໝາກສຸກສັດປີກການສັກອະຫິວາສັດປີກ

ສະໜັບສະໜູນໂດຍ:

With financial support from the Russian Federation

UNDP

ພິມທີ່: ໂຮງພິມດີບຸກ

ພິມຄັ້ງທີ: 1

ພິມເພື່ອ: ນຳໃຊ້ເຂົ້າໃນການຝຶກອົບຮົມ